CHANHTHAHONG and SYSOUPHAN. 2020. Souphanouvong Journal: Multi-disciplinary Research of Souphanouvong University: ISSN 2521- 0653. Vol. 6, Issue 1: Page 130 - 143.

ວາລະສານວິທະຍາສາດມະຫາວິທະຍາໄລສຸພານຸວົງ, ຄົ້ນຄວ້າວິໄຈສະຫະສາຂາວິຊາ, ວາລະສານເປີດກວ້າງ
ສະບັບທີ 6, ເຫຼັ້ມທີ 1, ມັງກອນ-ມິຖຸນາ 2020, ເລກທະບຽນ ISSN 2521-0653

# ຖານະການນໍາໃຊ້ຄໍາສັບຮຽກເອີ້ນສໍາລັບຄົນໃນລະບົບເຄືອຍາດຂອງຊົນເຜົ່າລາວລຸ່ມ[1]

***ຄໍາຊາຍ ຈັນທະຫົງ ແລະ ສັງຄົມ ສີສຸພັນ***

*ພາກວິຊາຄູພາສາ ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ*

**ບົດຄັດຫຍໍ້**

ການສຶກສານີ້ມີຈຸດປະສົງເພື່ອ: 1. ເກັບກໍາຮິບໂຮມຄໍາຮຽກຊື່ເອີ້ນຄໍາເຄືອຍາດໃນແຕ່ລະກຸ່ມໃຫ້ລະອຽດຂອງເຜົ່າລາວລຸ່ມ. 2. ເພື່ອໃຫ້ມີຄວາມຊັດເຈນຕໍ່ຄໍາສັບເຄືອຍາດເຜົ່າລາວລຸ່ມໃຫ້ຖືກຕ້ອງ.

ຄໍາຮຽກເອີ້ນຄໍາສັບສໍາລັບຄົນໃນລະບົບເຄືອຍາດໂດຍມີການຈັດປະເພດໃນບົດຄໍາຮຽກເອີ້ນມີຢູ່ 2 ເພດຄື:

- ຄໍາຮຽກເອີ້ນໃຫ້ເພດຍິງມີຄື: ຍ່າທວດ, ແມ່ຍ່າ, ແມ່ເຖົ້າ, ແມ່ປ້າ, ແມ່ນ້າ, ນ້າ, ນ້າສາວ, ນ້າໃພ້, ອາ, ນ້ອງສາວ.

- ຄໍາຮຽກເອີ້ນໃຫ້ເພດຊາຍມີຄື: ປູ່ທວດ, ປູ່, ພໍ່, ລຸງ, ອາວ, ນ້າບ່າວ, ອ້າຍ, ນ້ອງຊາຍ.

ນອກນີ້, ຍັງມີກຸ່ມພິເສດທີ່ບໍ່ບອກເພດແມ່ນຈັດຢູ່ໃນຈໍາພວກ: ລູກ, ຫຼານ, ເຫຼນ ໆລໆ.
ໃນບົດຖານະການນໍາໃຊ້ຄໍາສັບຮຽກເອີ້ນສໍາລັບຄົນໃນລະບົບເຄືອຍາດຂອງຊົນເຜົ່າລາວລຸ່ມແມ່ນໄດ້ເວົ້າກ່ຽວກັບມາລະຍາດໃນການຮຽກເອີ້ນຄົນໃນແຕ່ລະຖານະຂອງການຮຽກເອີ້ນເຊັ່ນ: ຜູ້ສູງອາຍຸ, ຜູ້ອາວຸໂສ, ແລະ ຜູ້ທີ່ມີອາຍຸຕໍ່າກວ່າ. ເປັນການເອີ້ນທີ່ໃຫ້ກຽດ, ເຄົາລົບນັບຖືເຊິ່ງກັນ ແລະ ກັນທາງສາຍຍາດ ຫຼື ຄົນທົ່ວໄປໃນສັງຄົມດ້ວຍການຊີ້ແຈງທາງດ້ານຄວາມໝາຍໃນການນໍາໃຊ້ໃຫ້ຊັດເຈນຂຶ້ນຕື່ມອີກ.

**ຄໍາສໍາຄັນ:** ຖານະການນໍາໃຊ້ຄໍາສັບຮຽກເອີ້ນ, ລະບົບເຄືອຍາດ, ຊົນເຜົ່າລາວລຸ່ມ.

# The title to be addressed in the system of kinship of Laotian ( Lao – Lum )

**Khamxay CHANHTHAHONG and Sangkhom SYSOUPHANH**

Department of Language, Faculty of Education, Souphanouvng University.

**ABSTRACT**

The objectives of this investigation were to collect all the details of the titles to be named in Lao Lum ethnic group kinship. to clarify Lao Lum kinship titles.

The kinship titles named in the Lao Lum ethnic group can be divided into two types, female and male's titles. The female's titles consisted of great grandmother, grandmother, aunts, and sisters, while the male's titles were great grandfather, grandfather, uncles, and brothers. In addition, there was an unidentified sex group including children, grandchildren, great grandchildren and others. The titles to be addressed in Lao Lum kinship was dependent on personal statuses, these included elderly, older and younger. The title was used to show honor and respect within the kinship and also others in the society. Furthermore, it helped to clarify personal title.

***Keywords:*** titles, kinship, Lao Lum ethnic group

---

[1]***ການອ້າງອີງພາສາລາວ:*** ຄໍາຊາຍ ຈັນທະຫົງ ແລະ ສັງຄົມ ສີສຸພັນ . (2020). **ຖານະການນໍາໃຊ້ຄໍາສັບຮຽກເອີ້ນສໍາລັບຄົນໃນລະບົບເຄືອຍາດຂອງຊົນເຜົ່າລາວລຸ່ມ**, *ວາລະສານວິທະຍາສາດ ມະຫາວິທະຍາໄລ ສຸພານຸວົງ, ເລກທະບຽນ ISSN 2521-065, ສະບັບທີ: 6, ເຫຼັ້ມທີ 1, ໜ້າທີ: 130 - 143.*

## 1. ພາກສະເໜີ

ປະເທດລາວເປັນປະເທດໜຶ່ງທີ່ມີຫຼາຍຊົນຊາດຊົນເຜົ່າເຊິ່ງອາໄສຢູ່ກະແຈກກະຈາຍແຕ່ເໜືອຕະຫຼອດໃຕ້. ບັນດາເຜົ່າໄດ້ມີການຈັດຕັ້ງແບ່ງເປັນຊື່ເອີ້ນທີ່ແຕກຕ່າງກັນ, ການແບ່ງຊື່ນີ້ກໍເພາະວ່າ: ມັນເໝາະກັບການແບ່ງເຂດການດຳລົງຊີວິດຂອງພວກເຂົາເຈົ້າເຊັ່ນ: ລາວເທິງ, ລາວສູງ ແລະ ລາວລຸ່ມ. ໃນແຕ່ລະເຜົ່າໃຫຍ່ທີ່ກ່າວມານັ້ນຍັງມີເຜົ່ານ້ອຍອີກຫຼາຍໆເຜົ່າອັນປະກອບເປັນເຄືອຍາດເຜົ່າລາວ. ບັນດາເຜົ່າລາວເຫຼົ່ານີ້ຍັງງພຽບພ້ອມດ້ວຍວັດທະນະທຳ ແລະ ຮີດຄອງປະ ເພນີອັນດີງາມຫຼາຍຢ່າງທີ່ເປັນເອກະລັກຂອງຊາດລາວເຊັ່ນ: ວັດທະນະທຳທາງດ້ານພາສາປາກເວົ້າ ເຊິ່ງພາສາລາວເປັນພາສາທີ່ມີຄວາມນິ້ມນວນ, ມີຄວາມລະອຽດອ່ອນ , ສາມາດສື່ສານຄວາມຮູ້ສຶກທີ່ດີຕໍ່ກັນໄດ້ຢ່າງສົມບູນ ເພາະວ່າພາສາປາກເວົ້າເປັນພາຫະນະສື່ສານລະຫວ່າງຄົນກັບຄົນ, ສັງຄົມກັບສັງຄົມ. ຍ້ອນພາສາຮັບໃຊ້ສັງຄົມ ແລະ ຄຽງຄູ່ກັບສັງຄົມຕະຫຼອດມາ, ເມື່ອສັງຄົມມີຄວາມກ້າວໜ້າສີວິໄລທາງດ້ານເສດຖະ ກິດ ແລະ ສັງຄົມແລ້ວພາສາກໍມີການຂະຫຍາຍຕົວ. ສະນັ້ນ , ຜູ້ທີ່ຈະຄົ້ນຄວ້າພາສາສາດເພື່ອຢາກຮັບໃຊ້ສັງຄົມໃຫ້ໄດ້ຕາມຄວາມຮຽກຮ້ອງຕ້ອງການຈະຕ້ອງໄດ້ຄົ້ນຄວ້າເຖິງຫຼາຍບັນຫາທີ່ກ່ຽວພັນຢູ່ໃນພາສາລາວ ແລະ ຊອກຫາວິທີທາງເພື່ອເຮັດໃຫ້ພາສາລາວອຸດົມ ສົມບູນ ແລະ ສາມາດຮັບໃຊ້ສັງຄົມຕະຫຼອດໄປ. ການນຳໃຊ້ພາສາລາວກໍຕ້ອງໃຫ້ຖືກຕ້ອງຕາມກະລະເທສະຖືກຕ້ອງຕາມສະພາບຕົວຈິງຂອງສັງຄົມເປັນ ຕົ້ນແມ່ນການຮຽກເອີ້ນໂດຍໃຊ້ຄຳເຄືອຍາດຮຽກເອີ້ນບຸກຄົນໃນຄອບຄົວ ແລະ ຍາດພີ່ນ້ອງ ແຕ່ການໃຊ້ຄຳເຄືອຍາດຕ້ອງມີການເລືອກໃຊ້ຄຳສັບໃຫ້ຖືກຕ້ອງກັບຖານະບຸກຄົນ. ການເລືອກຄຳສັບມາໃຊ້ແມ່ນອີງຕາມລະດັບຂອງຄຳ, ເວົ້າລວມແລ້ວພາສາເວົ້າເຫັນວ່າມີລະດັບການນຳໃຊ້ຂຶ້ນກັບກາລະເທສະ ແລະ ຖານະບຸກຄົນ, ການໃຊ້ຄຳເຄືອຍາດເພື່ອຮຽກເອີ້ນສະແດງໃຫ້ເຫັນເຖິງຄວາມມີມາລະຍາດ, ຄວາມນັບຖື, ຮັກແພງເປັນການໃຫ້ກຽດເຊິ່ງກັນ ແລະ ກັນໃນສັງຄົມກໍຄືຄອບຄົວ ແລະ ຍາດພີ່ນ້ອງ. ຍາດພີ່ນ້ອງ ແລະ ຄົນໃນສັງຄົມຈະມີຜູ້ອາຍຸສູງ , ມີຜູ້ອາຍຸຕໍ່າກວ່າ ແລະ ຜູ້ທີ່ມີຖານະຕຳແໜ່ງທີ່ແຕກຕ່າງກັນເຊີງເປັນນິໄສຂອງຄົນລາວທີ່ໃຫ້ຄວາມເຄົາລົບເຊິ່ງກັນ ແລະ ກັນມາແຕ່ດົນນານແລ້ວ. ດັ່ງນັ້ນ, ຈຶ່ງຕ້ອງມີການນຳໃຊ້ຄຳສັບໃຫ້ຊັດເຈນໂດຍສະເພາະແມ່ນເວລາເວົ້າເຊັ່ນ: ເວລາເວົ້າຈາກັບຜູ້ໃຫຍ່ຈະໃຊ້ຄຳສັບໃດ, ເວົ້າກັບຜູ້ນ້ອຍຈະຕ້ອງໃຊ້ຄຳສັບໃດ. ສະນັ້ນ, ມາລະ ຍາດ ແລະ ພາສາປາກເວົ້າຈຶ່ງມີການພົວພັນເຊິ່ງກັນ ແລະ ກັນຢ່າງສະນິດແໜ້ນ ຖ້າພາສາປາກເວົ້າຂາດມາລະຍາດກໍຈະກາຍເປັນພາສາທີ່ແຂງກະດ້າງບໍ່ມີສີລະປະ, ຂາດຄວາມອ່ອນນວນມ່ວນຫູ. ນອກນັ້ນ, ການໃຊ້ພາສາສິ່ງສຳຄັນອີກອັນໜຶ່ງແມ່ນທຳນອງສຽງເວົ້າ, ໃນເມື່ອເວົ້າເຖິງສຽງຂອງຄຳເວົ້າ ຫຼື ສຳນວນທີ່ໃຊ້ໃນການສື່ສານຕ້ອງໄດ້ຜ່ານການຄົ້ນຄິດເສຍກ່ອນ ກ່ອນທີ່ຈະມີອາລົມຄວາມຮູ້ສຶກປະປົນກັບສຽງເວົ້າອອກມາ. ດັ່ງນັ້ນ, ການຂຽນໃນຫົວ ຂໍ້ນີ້ຂຶ້ນມາກໍເພື່ອເປັນແນວທາງ ຫຼື ທິດສະດີ ແລະ ເອກະສານປະກອບສ່ວນໜຶ່ງໃນຂະແໜງພາສາ ແລະ ວັດທະນະ ທຳເຊິ່ງໄດ້ຍົກເອົາແຕ່ລະຄຳສັບທີ່ເປັນຄຳເຄືອຍາດມາໃຫ້ຄວາມກະຈ່າງແຈ້ງ.

## 2. ວິທີການຄົ້ນຄວ້າ

ການຄົ້ນຄວ້າແມ່ນໄດ້ລົງເລິກໄປຫຼາຍດ້ານໃນຄຳສັບເຄືອຍາດຂອງລາວມີຫຼາຍແບບຊື່ເອີ້ນເຊັ່ນ: ຍາດພີ່ ນ້ອງ, ເຊື້ອສາຍ, ວົງສາຄະນາຍາດ. ແຕ່ໃນທີ່ນີ້ແມ່ນໄດ້ຄົ້ນຄວ້າສະເພາະການນຳໃຊ້ຄຳສັບຮຽກເອີ້ນລຳດັບຄຳໃນລະບົບເຄືອຍາດຂອງຂອງເຜົ່າລາວລຸ່ມເປັນຕົ້ນແມ່ນ: ໄດ້ສະເໜີກ່ຽວກັບຄຳເຄືອຍາດ, ຄຳແທນນາມເປັນສ່ວນຫຼາຍເປັນຕົ້ນແມ່ນການນຳໃຊ້ ແລະ ຄວາມໝາຍໃຫ້ແຕ່ລະຄຳມີຄວາມໝາຍກະຈ່າງແຈ້ງຊັດເຈນສະເພາະເຈາະຈົງ. ໃນການເກັບກຳຂໍ້ມູນແມ່ນດຳເນີນໄປດ້ວຍການ:

- ເກັບຈາກເອກະສານທາງການຫຼາຍໆສະ ບັບຫຼາຍໆປະເພດເພື່ອມາສຶກສາຄົ້ນຄວ້າ ແລະ ຖອດຖອນເອົາບັນຫາທີ່ເຫັນວ່າສອດຄ່ອງເໝາະສົມມາຮຽບຮຽງເຂົ້າໃສກັນ.

- ເກັບຈາກການສຳພາດ ແລະ ສົນທະນາກຸ່ມຂອງຄູອາຈານທີ່ສອນພາສາລາວ, ຈາກຜູ້ທີ່ມີຄວາມຮູ້ ແລະ ມີປະສົບການສູງທາງດ້ານນີ້ໂດຍກົງ.

ໃນທີ່ສຸດກໍນຳເອົາຂໍ້ມູນທີ່ໄດ້ມາສັງເຄາະປຽບທຽບ ແລະ ໃຫ້ຄວາມໝາຍໄປຕາມສະພາບການນຳໃຊ້ຂອງສັງຄົມປັດຈຸບັນ.

## 3. ຜົນໄດ້ຮັບ

ຈາກການສຶກສາຄົ້ນຄວ້າສາມາດຮູ້ເຖິງຫຼາຍໆຢ່າງເຊັ່ນ:

- ການພົວພັນຂອງຄົນໃນຄອບຄົວ ແລະ ຍາດພີ່ນ້ອງ
- ຖານະຄຳເຄືອຍາດທີ່ໃຊ້ຮຽກເອີ້ນໂດຍທົ່ວໄປ.
- ຖານະການນຳໃຊ້ຄຳສັບເຄືອຍາດເພື່ອໃຊ້ຮຽກເອີ້ນເພດຍິງໃນຄອບຄົວ ແລະ ເຊື້ອສາຍຍາດພີ່ນ້ອງ.
- ຖານະການນຳໃຊ້ຄຳສັບເຄືອຍາດເພື່ອໃຊ້ຮຽກເອີ້ນເພດຊາຍໃນຄອບຄົວ, ເຊື້ອສາຍຍາດພີ່ນ້ອງ.

## 4. ວິພາກຜົນ

### 4.1 ຖານະຄຳເຄືອຍາດຮຽກເອີ້ນຊື່ໂດຍພື້ນຖານ

ຊື່ຮຽກພື້ນຖານໂດຍໃຊ້ຮຽກເອີ້ນຄຳເຄືອຍາດແມ່ນສະແດງເຖິງຄວາມຮັກແພງ, ຄວາມນັບຖື, ໃຫ້ກຽດເຊິ່ງກັນ ແລະ ກັນ. ໃນເວລາເວົ້າກໍມີຄວາມສຸພາບຮຽບຮ້ອຍ, ເວົ້າໃຫ້ມີນ້ຳສຽງທີ່ນິ້ມນວນອ່ອນຫວານເພື່ອເປັນການເພີ່ມຄວາມສະໜິດສະໜົມຂຶ້ນກວ່າເກົ່າ. ສະນັ້ນ, ໃນສັງຄົມລາວຈຶ່ງມີການນຳໃຊ້ຄຳເຄືອຍາດຮຽກເອີ້ນເປັນພື້ນຖານເຂົ້າໃນການດຳລົງຊີວິດປະຈຳວັນ, ແຕ່ການໃຊ້ກໍໃຫ້ຖືກຕາມຖານະບຸກຄົນ, ກາລະເທສະຢ່າງເໝາະສົມ ແລະ ສອດຄ່ອງກັບສະພາບຕົວຈິງຂອງສັງຄົມ. ຖານະຄຳເຄືອຍາດຮຽນເອີ້ນໂດຍພື້ນຖານແມ່ນໃຊ້ຮຽກເອີ້ນໄດ້ທັງຍິງ ແລະ ຊາຍເປັນຕົ້ນແມ່ນຮຽກເອີ້ນຢູ່ໃນຄອບຄົວ ແລະ ຍາດພີ່ນ້ອງເຊິ່ງໄດ້ແກ່ຄຳດັ່ງລຸ່ມນີ້: ຕູ້, ເຖົ້າ, ດອງ, ນ້າ, ຫຼານ, ເຫຼນ.....ເຫຼົ່ານີ້ເປັນຕົ້ນ.

ຮູບແຕ້ມສະແດງການຮຽກເອີ້ນເຄືອຍາດສາຍຕັ້ງ




### 4.2 ຖານະຄຳທີ່ໄດ້ຮັບຄຳວ່າ“ ຕູ້ ”ເພື່ອຮຽກເອີ້ນ.

“ ຕູ້ ” ໝາຍຄວາມວ່າແມ່ນຄຳຮຽກເອີ້ນຜູ້ເຖົ້າ ຫຼື ຜູ້ອາວຸໂສເຊິ່ງຢູ່ໃນສະຖານະພາບທີ່ເປັນພໍ່, ແມ່ຂອງພໍ່ ຫຼື ແມ່.

ການໃຊ້ຄຳສັບ ຕູ້ ແມ່ນຮຽກເອີ້ນແບບສຸພາບ, ການນັບຖືຜູ້ອາວຸໂສມີອາຍຸສູງສ່ວນຫຼາຍແມ່ນນຳໃຊ້ຢູ່ທາງພາກກາງຂອງລາວ. ຄຳສັບ ຕູ້ຍັງແມ່ນຄຳຫຍໍ້ມາຈາກຄຳສັບພໍ່ຕູ້, ແມ່ຕູ້ເພື່ອເຮັດໃຫ້ການຮຽກເອີ້ນງ່າຍຂຶ້ນ. ສ່ວນບາງທ້ອງຖິ່ນກໍຈະມີຄຳອື່ນເຊັ່ນ: ພໍ່ເຖົ້າ, ແມ່ເຖົ້າ ເປັນຕົ້ນ.

ຮູບແຕ້ມສະແດງການຮຽກເອີ້ນເຄືອຍາດ “ ຕູ້ ”




### 4.3 ຖານະທີ່ໄດ້ຮັບຄຳວ່າ “ເຖົ້າ” ເພື່ອຮຽກເອີ້ນ.

ຄຳສັບວ່າ “ເຖົ້າ” ໝາຍເຖິງຄຳຮຽກເອີ້ນເພດຍິງ ຫຼື ເພດຊາຍທີ່ມີຄວາມລຶ້ງເຄີຍຮັກແພງ ຄຳນີ້ແມ່ນໃຊ້ສະເພາະໝູ່ເພື່ອນທີ່ໃກ້ສິດສະໜິດສະໜົມກັນ. ການນຳໃຊ້ຄຳສັບເຖົ້າສ່ວນຫຼາຍແມ່ນໃຊ້ກັບຄົນທີ່ສະ

CHANHTHAHONG and SYSOUPHAN. 2020. Souphanouvong Journal: Multi-disciplinary Research of Souphanouvong University: ISSN 2521- 0653. Vol. 6, Issue 1: Page 130 - 143.

ໜິດສະໜິມກັນທີ່ສຸດເຊັ່ນ: ຜົວເມຍເຊິ່ງສາມາດຮຽກເອີ້ນໄດ້ທັງຍິງ ແລະ ຊາຍ. ນອກນັ້ນ, ຍັງໃຊ້ກັບຄົນທີ່ມີຄວາມໃກ້ສິດກັນ, ມີຄວາມຜູກພັນເຊິ່ງກັນ ແລະ ກັນ, ເຄີຍມີສ່ວນຮ່ວມທຸກຮ່ວມສຸກນຳກັນ.

ຕົວຢ່າງ: " ເຖົ້າ ເວົ້າຢອກຊື່ໆດອກ "

### 4.4 ຖານະທີ່ໄດ້ຮັບຄຳວ່າ" ດອງ " ເພື່ອຮຽກເອີ້ນ

ແມ່ນຄຳເອີ້ນແທນໃຫ້ບຸກຄົນທີ່ຢູ່ນຳກັນ, ຮ່ວມຮັກຮ່ວມແພງກັນ ແລະ ກ່ຽວຂ້ອງໂດຍທາງການແຕ່ງດອງຂອງຍາດພີ່ນ້ອງແມ່ດອງແມ່ນເອີ້ນລະຫວ່າງພໍ່ແມ່ຂອງສາວໃພ້ ແລະ ບ່າວເຂີຍ.

**" ດອງ "** ໝາຍເຖິງການສົມລົດ, ການສົມຢູ່ນຳກັນເປັນຜົວເມຍໂດຍມີການສູ່ຂວັນຜູກແຂນ, ພໍ່ແມ່ທັງສອງຝ່າຍກໍຈະເປັນແກ່ວເປັນດອງຍ້ອນແນວນັ້ນເອີ້ນວ່າ: "ດອງ" ຈຶ່ງມາຈາກການແຕ່ງດອງເຊິ່ງເປັນຄຳທີ່ເຖົ້າແກ່ທັງສອງຝ່າຍຮຽກເອີ້ນໃຫ້ກັນ ແລະ ກັນວ່າ "ເຖົ້າດອງ". ການເອີ້ນເຖົ້າດອງແມ່ນໃຊ້ໄດ້ທັງຍິງ ແລະ ຊາຍເປັນຕົ້ນແມ່ນພໍ່ແມ່ຂອງເຈົ້າບ່າວ ແລະ ເຈົ້າສາວຮຽກເອີ້ນໃຫ້ກັນ.

ຮູບແຕ້ມສະແດງການຮຽກເອີ້ນເຄືອຍາດ " ດອງ "




### 4.5 ຖານະທີ່ໄດ້ຮັບຄຳວ່າ "ນ້າ" ເພື່ອຮຽກເອີ້ນ

ນ້າແມ່ນການເອີ້ນໃຫ້ພໍ່ ຫຼື ແມ່ທີ່ບໍ່ແມ່ນພໍ່ແມ່ຄິງ ແລະ ແມ່ນແທນນາມໃຫ້ຍາດທີ່ຢູ່ໃນສະຖາ ນະພາບເປັນນ້ອງຂອງແມ່ ຫຼື ແມ່ທີ່ມີອາຍຸຮຸ່ນນ້ອງຂອງແມ່. ກໍລະນີເອົາຄຳເຄືອຍາດອື່ນມາຕື່ມທ້າຍຂອງຄຳສັບນ້າແລ້ວຈະເຮັດໃຫ້ແຕ່ລະຄຳມີຄວາມໝາຍບົ່ງບອກລະອຽດເຊັ່ນ: ນ້າເຂີຍ, ນ້າບ່າວ, ນ້າສາວ, ນ້າໃພ້.

ຄຳສັບ " ນ້າສາວ " ເປັນຄຳທີ່ຮຽກເອີ້ນເຄືອຍາດພື້ນຖານໃຫ້ຜູ້ຍິງທີ່ເປັນນ້ອງສາວຂອງແມ່ ແຕ່ຜູ້ຈະຮຽກເອີ້ນມີຫຼາຍໆຄົນຄື: ຍິງທີ່ເປັນນ້ອງສາວຂອງແມ່ເອີ້ນວ່າ: "ນ້າສາວ" ໃນທີ່ນີ້ແມ່ນການຮຽກເອີ້ນລະຫວ່າງຫຼານ ແລະ ຜູ້ເປັນນ້າສາວແຕ່ເຜົ່າລາວລຸ່ມບາງທ້ອງຖິ່ນຈະຮຽກເອີ້ນໃຫ້ນ້ອງສາວຂອງແມ່ວ່າແມ່ສາວ ຍ້ອນວ່າເປັນການສະແດງຄວາມຮັກແພງ, ຄວາມເຄົາລົບນັບຖືເໝືອນດັ່ງແມ່ຂອງຕົນເອງເຊິ່ງທັງສອງໄດ້ມີຄວາມໃກ້ສິດສະໜິດສະໜົມກັນ. ຍິງທີ່ເປັນນ້ອງສາວຂອງເມຍຮຽກວ່າ ນ້າສາວເຊັ່ນດຽວກັນ. ແມ່ນການຮຽກເອີ້ນກັນລະຫວ່າງນ້ອງສາວເມຍ ແລະ ຜູ້ເປັນອ້າຍ ອ້າຍເຂີຍ, ຖ້າວ່າອ້າຍເຂີຍພ້ອມດ້ວຍລູກຢູ່ຮ່ວມກັນແລ້ວພວກເຂົາຈະຮຽກເອີ້ນໃຫ້ຜູ້ມີຖານະເປັນນ້ອງສາວຂອງແມ່ວ່າ: ນ້າ ສາວຈຶ່ງແມ່ນການຮຽກເອີ້ນຕາມລູກເພາະນ້າສາວ ແມ່ນນ້ອງສາວຂອງແມ່ນັ້ນເອງ. ຄຳສັບ "ນ້າບ່າວ"ແມ່ນຄຳທີ່ຮຽກເອີ້ນໃຫ້ຜູ້ຊາຍທີ່ເປັນນ້ອງຊາຍຂອງແມ່ເອີ້ນວ່າ: ນ້າບ່າວເປັນການຮຽກເອີ້ນລະຫວ່າງຫຼານ ແລະ ນ້າບ່າວ. ບາງທ້ອງຖິ່ນຈະຮຽກນ້ອງຊາຍຂອງແມ່ວ່າ: ພໍ່ບ່າວ ນອກຈາກຄຳສັບ ນ້າບ່າວຍັງໃຊ້ຮຽກເອີ້ນໃຫ້ຜູ້ຊາຍທີ່ເປັນນ້ອງຊາຍທີ່ເປັນນ້ອງຊາຍຂອງເມຍເຊິ່ງເປັນການຮຽກເອີ້ນລະຫວ່າງອ້າຍ ແລະ ຜູ້ເປັນນ້ອງເມຍ. ຄຳສັບ " ນ້າເຂີຍ "ແມ່ນການຮຽກເອີ້ນໃຫ້ຜູ້ຊາຍທີ່ມາແຕ່ງງານກັບນ້າສາວ, ເຊິ່ງແມ່ນຝ່າຍຍິງເປັນຜູ້ຮຽກເອີ້ນ, ຜູ້ມີຖານະເປັນນ້າເຂີຍມີຄື: ຜູ້ຊາຍທີ່ເປັນຜົວຂອງນ້ອງສາວແມ່ເອີ້ນວ່າ: ນ້າເຂີຍ ແລະ ຍາດຝ່າຍຍິງ. ຜູ້ຊາຍທີ່ເປັນຜົວຂອງນ້ອງສາວເມຍເອີ້ນວ່າ ນ້າເຂີຍ ເປັນການຮຽກເອີ້ນລະຫວ່າງລຸງ, ປ້າ ແລະ ຜູ້ທີ່ເປັນນ້າເຂີຍເຊັ່ນ: ກໍລະນີຜົວເມຍລຸງປ້າຫາກມີລູກແລ້ວລູກຂອງເຂົາເຈົ້າກໍຈະຮຽກເອີ້ນວ່ານ້າເຂີຍເຊິ່ງມັນຂຶ້ນກັບການສະແດງຄວາມຮັກ ແພງ ຄວາມເຄົາລົບນັບຖືຂອງຜູ້ເປັນຫຼານ.

ຄຳສັບ " ນ້າໃພ້ "

ຄໍາສັບ “ນ້າໃພ້” ແມ່ນຄໍາທີ່ຍາດພີ່ນ້ອງຂອງຝ່າຍຊາຍຮຽກເອີ້ນໃຫ້ຜູ້ຍິງທີ່ມາເປັນເມຍຂອງນ້າບ່າວເປັນການຮຽກເອີ້ນແບບນັບຖືຜູ້ມີຖານະເປັນນ້າໃພ້. ຜູ້ຍິງທີ່ເປັນເມຍຂອງນ້ອງຊາຍແມ່ກໍຮຽກເອີ້ນວ່າ: “ນ້າໃພ້” ແມ່ນການຮຽກເອີ້ນລະຫວ່າງຫຼານ ແລະ ຜູ້ເປັນນ້າໃພ້.

ຜູ້ຍິງທີ່ເປັນເມຍຂອງນ້າບ່າວ (ນ້ອງຊາຍຂອງແມ່) ກໍເອີ້ນວ່າ: “ນ້າໃພ້” ນີ້ເປັນການເອີ້ນລະ ຫວ່າງອ້າຍເຂີຍ ແລະ ຜູ້ເປັນນ້າໃພ້. ຄໍາສັບ “ນ້າບ້າວ, ນ້າສາວ” ນອກຈາກຈະເປັນຄໍາສັບຮຽກເອີ້ນແທນຊື່ຂອງບຸກຄົນແລ້ວຍັງໃຊ້ເປັນຄໍາສັບນໍາໜ້າຊື່ສະ ເພາະຂອງບຸກຄົນຜູ້ທີ່ມີຖານະເປັນນ້າບ່າວ, ນ້າສາວເຊັ່ນ: ຄໍາວ່າ: ນ້າບ່າວຄໍາຊາຍມາຮອດມື້ໃດ ?

ຮູບແຕ້ມສະແດງການຮຽກເອີ້ນ “ ນ້າ ”




## 4.6 ຖານະທີ່ໄດ້ຮັບຄໍາວ່າ “ນ້ອງ” ເພື່ອຮຽກເອີ້ນ

ຄໍາສັບ “ນ້ອງ” ແມ່ນຄໍາຮຽກເອີ້ນແທນໃຫ້ຜູ້ທີ່ເກີດລຸນຖັດກັນມາຮ່ວມພໍ່ແມ່ດຽວກັນ ແລະ ຄໍາສັບນ້ອງກໍຄືຄໍາທີ່ພວກອ້າຍນ້ອງ ແລະ ຍາດພີ່ນ້ອງຜູ້ທີ່ມີອາຍຸສູງຮຽກເອີ້ນໃຫ້ຜູ້ທີ່ມີອາຍຸຕໍ່າກວ່າ. ສະນັ້ນ, ຄໍາສັບນ້ອງຈຶ່ງແມ່ນການຮຽກເອີ້ນລະຫວ່າງຜູ້ເປັນນ້ອງ ແລະ ອ້າຍເອື້ອຍ ເຊິ່ງຄໍາສັບເຫຼົ່ານີ້ແມ່ນນິຍົມໃຊ້ຫຼາຍຢູ່ໃນສັງຄົມລາວເພາະວ່າ: ມັນເປັນການໃຫ້ກຽດເຊິ່ງກັນ ແລະ ກັນ. ຄໍາສັບ “ນ້ອງ” ຍັງໃຊ້ເປັນຄໍານໍາໜ້າຊື່ສະເພາະຂອງບຸກຄົນໃນຖານະເປັນນ້ອງເພາະຜູ້ມີສະຖານະພາບເປັນນ້ອງມີຫຼາຍຄົນ. ສະນັ້ນ, ຈຶ່ງມີການຮຽກເອີ້ນໂດຍໃຊ້ຄໍາເຄືອຍາດ ແລະ ຊື່ສະເພາະໄປພ້ອມກັນ. ຄໍາສັບ “ນ້ອງ” ເພື່ອຢາກໃຫ້ໃຊ້ກັບບຸກຄົນອື່ນ ແລະ ມີຄວາມໝາຍໂດຍສະເພາະເຈາະຈົງແຕ່ລະບຸກຄົນແມ່ນສາມາດເອົາຄໍາເຄືອຍາດ ໃໝ່ເຊັ່ນ: ນ້ອງຊາຍ, ນ້ອງສາວ, ນ້ອງໃພ້, ນ້ອງເຂີຍ, ນ້ອງອາ, ນ້ອງອາວ...

- ຄໍາສັບ “ນ້ອງສາວ” ແມ່ນແມ່ຍິງທີ່ເກີດຕາມຫຼັງ ຫຼື ເກີດຖັດກັນມານ້ອງສາວຈະລວມທັງນ້ອງສາວຄີງ ແລະ ນ້ອງສາວ ຄໍາສັບນ້ອງສາວແມ່ນການຮຽກເອີ້ນລະຫວ່າງຜູ້ເປັນນ້ອງສາວ ແລະ ອ້າຍເອື້ອຍພ້ອມທັງຜູ້ມີອາຍຸສູງ.ຄໍາສັບ“ນ້ອງສາວ” ແມ່ນຮຽກເອີ້ນໃຫ້ແມ່ຍິງໃຊ້ກັບຍາດພີ່ນ້ອງໃກ້ຄຽງ. ການຮຽກເອີ້ນແບບນີ້ ກໍສະແດງເຖິງຄວາມມີມາລະຍາດ, ຄວາມຖະໜອມຖ່ອມຕົວໃນການປາກເວົ້າ ຫຼື ມາລະຍາດ ໃນການໃຊ້ພາສາທີ່ດີທີ່ຖືກຕ້ອງ ເຊັ່ນ: ນ້ອງສາວມີຫຍັງໃຫ້ອ້າຍຊ່ວຍບໍ່?.

- ສັບຄໍາວ່າ“ນ້ອງຊາຍ”. ຄໍາສັບວ່ານ້ອງຊາຍແມ່ນແທນໃຫ້ຜູ້ຊາຍທີ່ເກີດຕາມຫຼັງ ຫຼື ເກີດຖັດກັນມາບາງຄັ້ງກໍແມ່ນການຮຽກເອີ້ນໃຫ້ຜູ້ຊາຍທີ່ແມ່ນຮຸ່ນດຽວກັນນ້ອງຊາຍຂອງຕົນເອງເພື່ອສະແດງຄວາມຮັກແພງລະຫວ່າງ ອ້າຍ, ເອື້ອຍ, ນ້ອງ ເຊັ່ນ: “ ອ້າຍວິໄລ ! ເມື່ອເຫາະນ້ອງຝ້າວໄປໄຖນາ” ຄໍາວ່າ: ນ້ອງ ນອກຈາກໃຊ້ໃນຄອບຄົວຍາດພີ່ນ້ອງແລ້ວຍັງໃຊ້ກັບຄົນຢູ່ໃນສັງຄົມທົ່ວໆໄປເຊັ່ນ: “ດວງເດືອນນ້ອງຢູ່ບ້ານໂພນແກ້ວບໍ່”

- ຄໍາສັບ “ນ້ອງໃພ້” ແມ່ນເປັນຄໍາແທນຊື່ຂອງຜູ້ຍິງທີ່ມາເປັນເມຍຂອງນ້ອງຊາຍ, ເຊິ່ງເປັນການຮຽກເອີ້ນລະຫວ່າງລຸງ, ປ້າ ຫຼື ຜູ້ເປັນອ້າຍ. ເອື້ອຍຂອງນ້ອງຊາຍກັບນ້ອງໃພ້ເຊັ່ນ: ນ້ອງໃພ້ມາມື້ໃດ?

ນອກຈາກນີ້, ຜູ້ອື່ນທີ່ມີຖານະເປັນອ້າຍ, ເອື້ອຍກໍເອີ້ນໃຫ້ຜູ້ຍິງທີ່ມາເປັນໃພ້ວ່ານ້ອງໃພ້ໄດ້ເຊັ່ນກັນ.

- ຄໍາສັບ “ ນ້ອງເຂີຍ ” ແມ່ນຄໍາທີ່ເອີ້ນໃຫ້ຜູ້ຊາຍທີ່ມາແຕ່ງດອງກັບນ້ອງສາວຂອງພວກອ້າຍ, ເອື້ອຍຜູ້ມີອາຍຸສູງກວ່າເອີ້ນໃຫ້ວ່ານ້ອງເຂີຍເຊິ່ງມັນເປັນການຮຽກເອີ້ນລະຫວ່າງລຸງ, ປ້າ ແລະ ນ້ອງເຂີຍ ຫຼື ນ້າເຂີຍ ເຊັ່ນ: “ນ້ອງເຂີຍຊິໄປວຽກແລ້ວບໍ?”

- ຄໍາສັບວ່າ "ນ້ອງອາວ"ຄໍາສັບວ່າ: "ນ້ອງອາວ" ແມ່ນຄໍາເວົ້າຂອງຜູ້ຍິງທີ່ມາເປັນໃພ້ຮຽກເອີ້ນໃຫ້ນ້ອງຊາຍຂອງຜົວເປັນການຮຽກເອີ້ນ ລະຫວ່າງຜູ້ທີ່ເປັນນ້ອງອາວ ແລະ ເອື້ອຍໃພ້ກໍລະນີນີ້ແມ່ນຢູ່ຮ່ວມກັນຫຼາຍໆຄົນຄື: ຜົວເມຍ, ລູກ ແລະ ຜູ້ທີ່ເປັນຜົວຈະຮຽກເອີ້ນໃຫ້ນ້ອງຊາຍຕົນເອງວ່າ: ນ້ອງອາວ, ເຊິ່ງເປັນການເອີ້ນຕາມເມຍ. ຖ້າແມ່ນລູກຮຽກໃຫ້ຜູ້ທີ່ເປັນນ້ອງຂອງພໍ່ຈະເອີ້ນວ່າ: ພໍ່ອາວ, ເພາະວ່າອາວແມ່ນຜູ້ທີ່ເກີດລຸນພໍ່ເພື່ອສະແດງຄວາມນັບຖືຈຶ່ງເອີ້ນວ່າ: ພໍ່ອາວ. ເຊິ່ງໃນທີ່ນີ້ແມ່ນການຮຽກເອີ້ນລະ ຫວ່າງ ຫຼານ ແລະ ຜູ້ທີ່ເປັນພໍ່ອາວ.

- ຄໍາສັບວ່າ "ນ້ອງອາ." ແມ່ນຄໍາສັບແທນໃຫ້ຜູ້ທີ່ມາເປັນໃພ້ຮຽກເອີ້ນໃຫ້ນ້ອງສາວຂອງຜົວເຊິ່ງມີເຜົ່າລາວບາງທ້ອງຖິ່ນກໍເອີ້ນວ່າ: ນ້ອງກົວ (ຊໍາ ເໜືອ, ຊຽງຂວາງ). ຖ້າຜູ້ເປັນອ້າຍຮຽກເອີ້ນນ້ອງສາວຂອງຕົນເອງວ່າ: ນ້ອງອາ ກໍແມ່ນເອີ້ນຕາມລູກ ແລະ ເມຍ. ຖ້າຫາກວ່າມີລູກແລ້ວ ລູກຈະເອີ້ນນ້ອງຊາວຂອງພໍ່ວ່າ: ແມ່ອາ ຫຼື ແມ່ກົວ ເຊິ່ງເປັນການເອີ້ນລະຫວ່າງຫຼານກັບຜູ້ທີ່ເປັນແມ່ອາ ແລະ ແມ່ກົວ. ດັ່ງນັ້ນ, ນ້ອງອາຈຶ່ງແມ່ນການຮຽກເອີ້ນລະຫວ່າງເອື້ອຍ, ນ້ອງສາວຂອງຜົວເຊັ່ນ: "ອາມີລູກສາວຄົນໜຶ່ງຊື່ວ່າສີດາຈັນ "

### 4.7 ຖານະທີ່ໄດ້ຮັບຄໍາວ່າ "ລູກ" ເພື່ອຮຽກເອີ້ນ

ລູກແມ່ນ ຄໍາຮຽກເອີ້ນຄົນ ຫຼື ສັດທີ່ເກີດຈາກພໍ່ແມ່. ຄໍາສັບ "ລູກ" ແມ່ນຄໍາຮຽກເອີ້ນຂອງພໍ່ແມ່ ແລະ ຮຽກເອີ້ນໃຫ້ຜູ້ທີ່ມີຖານະເປັນລູກແມ່ນການຮຽກເອີ້ນລະຫວ່າງ ລູກໆ ແລະ ພໍ່ແມ່ ພ້ອມທັງຍາດພີ່ນ້ອງທີ່ມີສະຖານະພາບເປັນພໍ່ແມ່ ແລະ ໝາຍເຖິງຜູ້ທີ່ໄດ້ຮັບຄວາມອົບອຸ່ນຈາກພໍແມ່ ພໍ່ແມ່ໄດ້ໃຫ້ ການເບິ່ງແຍງລ້ຽງດູທຸກໆການເຄື່ອນໄຫວຂອງລູກ ແຕ່ນ້ອຍຈົນໃຫຍ່ເຊິ່ງວ່າຄວາມສໍາພັນລະຫວ່າງພໍ່ແມ່ ແລະ ລູກແມ່ນບໍ່ສາມາດຕັດແຍກອອກຈາກກັນໄດ້. ແມ່ນຜູ້ທີ່ພໍແມ່ໃຫ້ກໍາເນີດ. ສະນັ້ນ, ການຮຽກເອີ້ນໃຊ້ຄໍາສັບ "ລູກ" ແມ່ນສະແດງເຖິງຄວາມຮັກແພງ, ຄວາມຖະນຸຖະໜອມ. ນອກຈາກການໃຊ້ຮຽກເອີ້ນບຸກຄົນທີ່ມີຖານະເປັນລູກ ແລ້ວຄໍາສັບ "ລູກ" ຍັງໃຊ້ເປັນຄໍານໍາໜ້າຊື່ສະເພາະຂອງຜູ້ທີ່ມີຖານະເປັນລູກແມ່ນມີຫຼາຍໆຄົນ. ສະນັ້ນ, ຈຶ່ງມີຄວາມຈໍາເປັນຕ້ອງໄດ້ໃຊ້ຄໍາເຄືອຍາດ ແລະ ຊື່ສະເພາະເອີ້ນພ້ອມໆກັນ. ເມື່ອຢາກໃຫ້ຄໍາສັບ "ລູກ" ມີຄວາມກະຈ່າງແຈ້ງ ແລະ ບົ່ງບອກສະເພາະເຮົາສາມາດເອົາຄໍາເຄືອຍາດມາຕື່ມເຂົ້າທ້າຍຂອງຄໍາສັບ "ລູກ" ເຊັ່ນ: ລູກສາວ, ລູກຊາຍ, ລູກເຂີຍ, ລູກໃພ້, ລູກຫຼານ. ເຊິ່ງແຕ່ລະຄໍາສັບເຫຼົ່ານີ້ແມ່ນຈະຊີ້ແຈງໃຫ້ລະອຽດດັ່ງນີ້:

- ຄໍາສັບ "ລູກສາວ"ແມ່ນຄໍາແທນຊື່ໃຫ້ແມ່ຍິງທີ່ພໍ່ແມ່ໃຫ້ກໍາເນີດ ແລະ ກໍແມ່ນການຮຽກເອີ້ນລະຫວ່າງ ລູກສາວ ແລະ ພໍ່ແມ່ບາງເທື່ອກໍແມ່ນຍາດຕິພີ່ນ້ອງ. ການເອີ້ນວ່າລູກສາວນັ້ນເປັນການເອີ້ນທີ່ມີຄວາມສຸພາບ, ນິ້ມນວນຕໍ່ກັບລູກສາວຂອງຕົນເອງໂດຍຜ່ານທາງພາສາປາກເວົ້າ ແລະ ການປະ ພຶດເຮັດໃຫ້ສາຍພົວພັນພໍ່ແມ່ລູກຍິ່ງໜັກແໜ້ນກວ່າເກົ່າ. ຕົວຢ່າງ: "ລູກສາວຂອງແມ່ມາແຕ່ຊໍາເໜືອ"

- ຄໍາສັບ "ລູກຊາຍ"ແມ່ນຄໍາເອີ້ນຊື່ໃຫ້ແກ່ຜູ້ຊາຍທີ່ພໍ່ແມ່ ໄດ້ໃຫ້ກໍາເນີດ ພ້ອມທັງໄດ້ເບິ່ງແຍງຖະໜອມຫອມຮັກພໍ່ແມ່ໄດ້ໃຫ້ຄວາມໃກ້ຊິດມາແຕ່ນ້ອຍຈົນໃຫຍ່ການເອີ້ນວ່າ: "ລູກຊາຍ" ແມ່ນໃນຊ່ວງເວລາທີ່ພໍ່ແມ່ສະແດງຄວາມພໍໃຈ, ເສຍໃຈຕໍ່ກັບລູກຊາຍຂອງຕົນເອງແລ້ວຈຶ່ງອຸທານອອກມາໂດຍໃຊ້ຄໍາວ່າ: "ໄຊໂຍ! ລູກຊາຍຂ້ອຍກໍເຮັດໄດ້". ແຕ່ໃນກໍລະ ນີທີ່ພໍ່ແມ່ມັກຈະໃຊ້ຄໍາສັບດັ່ງກ່າວເຊັ່ນ: "ໂທ ! ລູກຊາຍຂອງແມ່ປານໃດລູກຈະຕ່າວມາ?"

- ຄໍາສັບ "ລູກເຂີຍ"ແມ່ນຄໍາເອີ້ນທີ່ພໍ່ແມ່ ແລະ ເຖົ້າແກ່ລຸງຕາຂອງຝ່າຍຍິງເອີ້ນໃຫ້ຜູ້ຊາຍທີ່ມາແຕ່ງດອງກັບລູກສາວທີ່ຖືກຕ້ອງຕາມຮີດຄອງ ແລະ ປະເພນີ ອັນດີງາມຂອງລາວ.ການໃຊ້ຄໍາວ່າ "ລູກເຂີຍ" ແມ່ນການຮຽກເອີ້ນລະຫວ່າງພໍ່ເຖົ້າແມ່ ເຖົ້າກັບຜູ້ເປັນລູກເຂີຍບາງເທື່ອກໍແມ່ນຍາດຕິພີ່ນ້ອງຮຽກເອີ້ນໃຫ້ໂດຍສະເພາະແມ່ນພໍ່ເຖົ້າ, ແມ່ເຖົ້າ ຫຼື ເຖົ້າແກ່ລຸງຕາ.

- ຄໍາສັບ "ລູກໃພ້" ໝາຍເຖິງຄໍາທີ່ພໍ່ແມ່ ແລະ ຍາດຕິພີ່ນ້ອງຂອງຝ່າຍຊາຍເອີ້ນໃຫ້ແມ່ຍິງທີ່ມາເປັນ

ເມຍຂອງລູກຊາຍ. ເຊິ່ງມັນແມ່ນການຮຽກເອີ້ນລະຫວ່າງຜູ້ເປັນລູກໃພ້ ແລະ ພໍ່ແມ່ຍາດພີ່ນ້ອງທີ່ມີຖານະເປັນພໍ່ແມ່ ຫຼື ເຖົ້າແກ່ລຸງຕາຂອງຝ່າຍຊາຍ ການຮັບເອົາລູກໃພ້ກໍຕ້ອງໃຫ້ຖືກຕ້ອງຕາມຮີດຄອງປະເພນີ. ລູກໃພ້ກໍຕ້ອງປະພຶດຕົນໃຫ້ຜູ້ໃຫຍ່ນັບຖື, ຮັກແພງຮູ້ຈັກຮີດຄອງປະເພນີຂອງບ້ານເມືອງ. ເຮັດໃຫ້ພໍ່ແມ່ຂອງຜົວມີຄວາມຮັກແພງຕໍ່ຕົນເອງ."ລູກໃພ້ແມ່ນການຮຽກກັນລະຫວ່າງ ພໍ່ປູ່ແມ່ຍ່າ ພ້ອມທັງເຖົ້າແກ່ລຸງຕາຂອງຝ່າຍຊາຍ..."

- ຄຳສັບ "ລູກຫຼານ" ແມ່ນການຮຽກເອີ້ນແບບລວມໆເຊິ່ງມີທັງລູກຫຼານ ຢູ່ນຳກັນບາງເທື່ອຈະແມ່ນໝູ່ເພື່ອນຂອງລູກແຕ່ເພື່ອສະແດງຄວາມຮັກແພງຈຶ່ງເອີ້ນໂດຍໃຊ້ຄຳສັບ "ລູກຫຼານ" ແມ່ນຮຽກເອີ້ນໃຫ້ໄດ້ທັງເພດຍິງ ແລະ ເພດຊາຍ. ເຊິ່ງມັນເປັນການຮຽກເອີ້ນລະຫວ່າງລູກຫຼານ ແລະ ພໍ່ແມ່ພີ່ນ້ອງ.

**4.8 ຖານະທີ່ໄດ້ຮັບຄຳວ່າ "ຫຼານ" ເພື່ອຮຽກເອີ້ນ.**

ຫຼານແມ່ນຄຳຮຽກເອີ້ນໃຫ້ບຸກຄົນໃນຖາ ນະເປັນລູກຂອງລູກ ເຮົາເອີ້ນວ່າຫຼານ ແລະ ລູກຂອງອ້າຍ ຫຼື ລູກຂອງນ້ອງເຮົາກໍເອີ້ນ: ຫຼານເຊັ່ນກັນ ແລະ ຄຳສັບວ່າ "ຫຼານ" ກໍຍັງໝາຍເຖິງຜູ້ຊາຍ ຫຼື ຜູ້ຍິງທີ່ເປັນລູກຂອງລູກ, ຂອງອ້າຍ ຫຼື ເອື້ອຍ ລູກຂອງນ້ອງຊາຍ ຫຼື ນ້ອງສາວ. ຜູ້ທີ່ຈະຮຽກເອີ້ນ ໃຫ້ຫຼານນັ້ນມີຫຼາຍໆຄົນຄື: ອ້າຍ, ເອື້ອຍ, ນ້ອງ, ພໍ່ແມ່. ພ້ອມທັງ ຜູ້ອາວຸໂສ, ຜູ້ອາຍຸສູງ ເປັນຕົ້ນແມ່ນ ພໍ່ຕູ້ແມ່ຕູ້ເຊັ່ນ: "ເອີ! ອາວສັກບອກລູງແດ່ວ່າ ເຊື່ອຫຼານເຈົ້າໂລດຊັ້ນເດີ"

- ຄຳສັບ "ຫຼານສາວ" ແມ່ນໝາຍເຖິງຜູ້ຍິງທີ່ມີຖານະເປັນຫຼານຢູ່ໃນວົງສາຄະນາຍາດພີ່ນ້ອງ, ເຊິ່ງມີການປະພຶດຕົວດີສາມາດເຮັດໃຫ້ຜູ້ອາວຸໂສຍ້ອງຍໍຮັກແພງ. ສະນັ້ນ, ການຮຽກເອີ້ນວ່າ: ຫຼານສາວຈຶ່ງເປັນການສະແດງຄວາມຮັກແພງສ່ວນຫຼາຍແມ່ນຮຽກເອີ້ນໃຫ້ຜູ້ຍິງໜຸ່ມ ແລະ ໃນສະຖານະເປັນຫຼານ.

- ຄຳສັບ "ຫຼານຊາຍ"ແມ່ນຜູ້ຊາຍທີ່ມີຖານະເປັນຫຼານຢູ່ໃນວົງຍາດພີ່ນ້ອງເຊິ່ງເປັນການຮຽກເອີ້ນລະຫວ່າງຫຼານຊາຍ ແລະ ແມ່ປ້າ, ພໍ່ລຸງ... ພ້ອມທັງຜູ້ອາວຸໂສ, ຍາດພີ່ນ້ອງທີ່ມີຖານະເປັນລຸງ, ປ້າ, ອາວ, ອາ ...

- ຄຳສັບ "ຫຼານເຂີຍ"ແມ່ນຮຽກເອີ້ນແທນໃຫ້ຜູ້ຊາຍທີ່ມາແຕ່ງການກັບຫຼານສາວເຊິ່ງແມ່ນຍາດຕິພີ່ນ້ອງ ຫຼື ເຖົ້າແກ່ລຸງຕາ ຝ່າຍຫຼານສາວເປັນຜູ້ຮຽກເອີ້ນໃຫ້ຜູ້ຊາຍທີ່ມາເປັນເຂີຍ.

- ຄຳສັບ "ຫຼານໃພ້"ແມ່ນແທນໃຫ້ຜູ້ຍິງທີ່ມາເປັນເມຍຫຼານຊາຍໂດຍມີການແຕ່ງດອງສູ່ຂວັນຜູກແຂນຖືກຕ້ອງຕາມຮີດຄອງປະເພນີ ແລະ ພາຍໃຕ້ການເຫັນດີ ເຫັນພ້ອມຂອງຍາດຜູ້ໃຫຍ່. ດັ່ງນັ້ນ, ຄຳສັບ "ຫຼານໃພ້" ເປັນການຮຽກເອີ້ນລະຫວ່າງຜູ້ທີ່ເປັນຫຼານໃພ້ ແລະ ເຖົ້າແກ່, ຍາດພີ່ນ້ອງ (ຂອງ ຫຼານຊາຍ). ນອກຈາກສິ່ງທີ່ກ່າວມາແລ້ວ ຄຳສັບ "ຫຼານ" ກໍຍັງໃຊ້ເປັນຄຳນຳໜ້າສື່ສະເພາະຂອງບຸກຄົນທີ່ມີຖານະເປັນຫຼານເພື່ອຮຽກເອີ້ນຢູ່ໃນຄອບຄົວ, ຍາດພີ່ນ້ອງ ແລະ ຜູ້ອື່ນໆ.




**4.9 ຖານະທີ່ໄດ້ຮັບຄຳວ່າ "ເຫຼນ" ເພື່ອຮຽກເອີ້ນ.**

"ເຫຼນ" ແມ່ນເຄືອຍາດເຊິ່ງເປັນລູກຂອງຫຼານເຊິ່ງເຮົາເອີ້ນວ່າ "ເຫຼັນ" ຫຼື ເຫຼນ ແລະ ໃນນັ້ນເຫຼນແມ່ນທັງຜູ້ຍິງ ຫຼື ຜູ້ຊາຍທີ່ເປັນລູກຂອງຫຼານເຊິ່ງແມ່ນການຮຽກເອີ້ນລະຫວ່າງລູກຂອງຫຼານກັບປູ່ທວດ, ຍ່າທວດ.

ໃນສັງຄົມລາວຈະບໍ່ມີຄົນນິຍົມຮຽກເອີ້ນປານໃດແຕ່ມັກຈະໃຊ້ເປັນຊື່ເອີ້ນຫຼາຍກວ່າ ແລະ ມີ

ຄວາມຈຳເປັນຕ້ອງສະເໜີແຕ່ທາງທີມງານຂອງພວກເຮົາຈະສະເໜີພຽງແຕ່ນິຍາມເທົ່ານັ້ນ.

**5. ສະຖານະການໃນຄຳສັບເຄືອຍາດ ເພື່ອຮຽກເອີ້ນເພດຍິງໃນຄອບຄົວ ແລະ ເຊື້ອສາຍຍາດພີ່ນ້ອງ**

ຖານະການໃຊ້ຄຳສັບເຄືອຍາດເພື່ອຮຽກເອີ້ນໃຫ້ເພດຍິງໃນຄອບຄົວ ແລະ ຍາດພີ່ນ້ອງແມ່ນການສະແດງ, ຄວາມນັບຖື ແລະ ການໃຫ້ກຽດເຊິ່ງກັນແລະ ກັນຄຳເຄືອຍາດທີ່ຈະເອົາມາຮຽກເອີ້ນແມ່ນສາມາດຮຽກເອີ້ນໃຫ້ຕົນເອງ ແລະ ຜູ້ທີ່ຕົນເອງລົມ ນຳ ຄື: ຄຳ “ເຄືອຍາດ” ເພື່ອຮຽກເອີ້ນຕົນເອງ ( ແທນໃຫ້ຊື່ຂອງຜູ້ເວົ້າ) ໃນເວລາມີຄູສົນທະນາ ຫຼື ຜູ້ລົມ ນຳ. ຖ້າຈະຮຽກເອີ້ນແຕ່ຊື່ສະເພາະເທົ່ານັ້ນ ມັນຈະເປັນການຮຽກເອີ້ນແບບເປັນກັນເອງໂພດ ໂດຍບໍ່ມີການໃຫ້ກຽດ, ເພື່ອເປັນການໃຫ້ກຽດ, ເພື່ອມາລະ ຍາດໃນການປາກເວົ້າ ສະນັ້ນ, ຈຶ່ງຮຽກເອີ້ນໂດຍໃຊ້ ຄຳເຄືອຍາດ. ຄຳເຄືອຍາດທີ່ໃຊ້ຮຽກເອີ້ນເພດຍິງປະ ກອບມີ: ຍ່າທວດ, ຍ່າ, ແມ່, ປ້າ, ອາ, ນ້າສາວ, ເອື້ອຍ, ໃພ້, ສາວ.

**5.1 ຖານະການຮຽກເອີ້ນຄຳສັບ “ຍ່າທວດ” ເພື່ອຮຽກເອີ້ນ.**

ຄຳສັບ “ຍ່າທວດ” ແມ່ນຄຳທີ່ພວກລູກຫຼານ, ເຫຼນຮຽກເອີ້ນໃຫ້ແມ່ຂອງປູ່ ແລະ ມີຄວາມໝາຍສະແດງເຖິງຜູ້ທີ່ມີອາຍຸສູງ, ຜູ້ອາວຸໂສໃນຕະກຸນກໍຄືລະບົບເຄືອຍາດ. ໃນນີ້ແມ່ນຢູ່ລະດັບຖານະເປັນແມ່ຂອງປູ່ເຊິ່ງເຮົາລູກຫຼານເອີ້ນ: “ຍ່າທວດ”ການເອີ້ນ: ຍ່າທວດຈະບໍ່ປະກົດເຫັນຫຼາຍປານໃດ ຢູ່ໃນສັງຄົມລາວ ເຊິ່ງແມ່ນການຮຽກເອີ້ນລະຫວ່າງຫຼານ, ເຫຼນ ແລະ ຍ່າທວດມີບາງທ້ອງຖິ່ນທາງຊຳເໜືອຈະຮຽກເອີ້ນໃຫ້ແມ່ຂອງປູ່ວ່າ: “ເອມເຖົ້າ”

**5.2 ຖານະການຮຽກເອີ້ນຄຳສັບ “ຍ່າ” ເພື່ອຮຽກເອີ້ນ.**

ຄຳສັບ “ຍ່າ” ແມ່ນການຮຽກເອີ້ນຄົນຜູ້ທີ່ມີສະຖານະພາບສູງເປັນຜູ້ອາວຸໂສເຊິ່ງຢູ່ໃນຖານະເປັນແມ່ຂອງພໍ່ເຮົາ ແລະ ມີຄວາມໝາຍສະແດງເຖິງຍິງທີ່ເປັນແບບຢ່າງທີ່ດີ ແລະ ເປັນທີ່ນັບຖືໃຫ້ແກ່ພວກລູກຫຼານ, ຍ່າ, ແມ່ນຍິງ ທີ່ເປັນແມ່ຂອງພໍ່. ຄຳສັບ “ຍ່າ” ແມ່ນຈະໃຊ້ຮຽກເອີ້ນໃຫ້ຜູ້ມີຖານະເປັນ ”ຍ່າ” ສ່ວນຜູ້ທີ່ຈະເອີ້ນໃຫ້ຍ່າແມ່ນມີຫຼາຍໆຄົນ ຄື:

- ເປັນຄຳທີ່ຫຼານຮຽກເອີ້ນໃຫ້ແມ່ຂອງພໍ່ວ່າ “ຍ່າ” ບາງທ້ອງຖິ່ນຈະຮຽກເອີ້ນວ່າ: “ຕູ້ຍ່າ” ທັງສອງຄຳສັບ “ຕູ້ຍ່າ” ແລະ “ຍ່າ” ແມ່ນມີຄວາມໝາຍຄືກັນ, ແມ່ນການຮຽກເອີ້ນລະຫວ່າງຍ່າ ແລະ ຜູ້ເປັນຫຼານ.
- ຜູ້ຍິງທີ່ມາເປັນໃພ້ຮຽກເອີ້ນໃຫ້ແມ່ຂອງຜົວວ່າ: ຍ່າ ຫຼື ແມ່ຍ່າ ແມ່ນການຮຽກເອີ້ນລະຫວ່າງລູກໃພ້ ແລະ ແມ່ຍ່າ ເຊັ່ນ:“ລູກເຮີຍ ໄປຢູ່ນຳ ຍ່າຖ້າແມ່ເດີ”




ຮູບແຕ້ມສະແດງການຮຽກເອີ້ນ “ ຍ່າ ”

**5.3 ຖານະການຮຽກເອີ້ນຄຳສັບ “ປ້າ” ເພື່ອຮຽກເອີ້ນ.**

ປ້າໝາຍເຖິງຜູ້ທີ່ຢູ່ໃນຖານະເປັນເອື້ອຍຂອງພໍ່ ແລະ ແມ່ລວມທັງເມຍຂອງລຸງ. ພ້ອມນັ້ນແມ່ຍິງທີ່ອາວຸໂສ, ມີອາຍຸຮຸ່ນເອື້ອຍຂອງພໍ່ ຫຼື ແມ່ເຮົາເຂົ້າເອີ້ນປ້າເຊັ່ນກັນ. ການຮຽກເອີ້ນໃຫ້ຜູ້ຍິງທີ່ມີຖານະເປັນປ້າໂດຍໃຊ້ຄຳວ່າ “ປ້າ” ແມ່ນການສະແດງຄວາມນັບຖືຜູ້ເປັນແບບຢ່າງໃຫ້ແກ່ລູກຫຼານ.ແຕ່ໃນສັງຄົມຕົວຈິງຍັງໃຊ້ຮຽກເອີ້ນໃຫ້ບຸກຄົນອື່ນອີກຄື: ຍິງທີ່ເປັນເອື້ອຍຂອງຜົວຮຽກເອີ້ນວ່າ: “ປ້າ” ແມ່ນການຮຽກເອີ້ນລະຫວ່າງນ້ອງໃພ້ ແລະ ປ້າກໍລະນີ້ຜົວເມຍນ້ອງໃພ້ຫາກມີລູກແລ້ວລູກຂອງເຂົາເຈົ້າຈະຮຽກເອີ້ນໃຫ້ເອື້ອຍຂອງພໍ່ວ່າ: ແມ່ປ້າ ເຊິ່ງແມ່ນການຮຽກເອີ້ນລະຫວ່າງຫຼານ ແລະ ຜູ້ເປັນແມ່ປ້າ. ຍິງທີ່ເປັນເອື້ອຍຂອງເມຍຮຽກເອີ້ນວ່າ: “ປ້າ” ແມ່ນການຮຽກເອີ້ນລະຫວ່າງປ້າ ແລະ

ນ້ອງເຂີຍ, ພ້ອມທັງຍາດພີ່ນ້ອງທີ່ເປັນຮຸ້ນດຽວກັບນ້ອງເຂີຍ. ຖ້າຜົວເມຍນ້ອງເຂີຍຫາກມີລູກແລ້ວລູກຂອງເຂົາເຈົ້າຈະຮຽກເອີ້ນໃຫ້ເອື້ອຍຂອງແມ່ວ່າ: ແມ່ປ້າ ຫຼື ປ້າເປັນການຮຽກເອີ້ນລະ ຫວ່າງປ້າ ແລະ ຫຼານ. ຍິງທີ່ເປັນເມຍຂອງອ້າຍເມຍຮຽກເອີ້ນວ່າ: "ປ້າ" ແມ່ນການຮຽກເອີ້ນລະຫວ່າງປ້າ ແລະ ຜູ້ທີ່ເປັນນ້ອງເຂີຍ. ການຮຽກເອີ້ນວ່າ "ປ້າ" ໃນທີ່ນີ້ຍ້ອນວ່າ ແມ່ນເມຍຂອງລຸງ, ສະນັ້ນ, ຈຶ່ງຮຽກເອີ້ນວ່າ: "ປ້າ" ຖ້າແມ່ນລູກຂອງເຂົາເຈົ້າຮຽກເອີ້ນວ່າຈະເວົ້າວ່າ "ແມ່ປ້າ". ຍິງທີ່ເປັນເມຍ ຂອງອ້າຍຜົວຮຽກເອີ້ນວ່າ: "ປ້າ" ແມ່ນການຮຽກເອີ້ນລະຫວ່າງນ້ອງໃພ້ ແລະ ປ້າ. ການຮຽກເອີ້ນວ່າ "ປ້າ" ໃນທີ່ນີ້ຍ້ອນວ່າ ເພິ່ນແມ່ນເມຍຂອງລຸງ ຖ້າແມ່ນລູກຂອງເຂົາເຈົ້າຜູ້ອື່ນຈະເວົ້າວ່າ: ແມ່ປ້າ. ສະນັ້ນ, ການຮຽກເອີ້ນວ່າ: ປ້າ ແລະ ແມ່ປ້າຈຶ່ງແມ່ນການຮຽກເອີ້ນ ລະຫວ່າງປ້າ, ແມ່ປ້າ ແລະ ຫຼານ, ນ້ອງໃພ້, ນ້ອງເຂີຍ

**5.4 ຖານະການຮຽກເອີ້ນຄຳສັບ "ແມ່" ເພື່ອຮຽກເອີ້ນ.**

ຄຳສັບ "ແມ່" ແມ່ນຄຳທີ່ພວກລູກໆຮຽກເອີ້ນໃຫ້ຜູ້ທີ່ມີຖານະເປັນແມ່."ແມ່" ແມ່ນຍິງທີ່ໄດ້ໃຫ້ກຳເນີດແກ່ລູກບາງທ້ອງຖິ່ນຈະຮຽກເອີ້ນວ່າ ເອມແມ່ນສັບທ້ອງຖິ່ນທາງຊຳເໜືອ. ເຊິ່ງທັງສອງສັບແມ່ນມີຄວາມໝາຍຄືກັນ. ນອກຈາກນີ້ຄຳສັບ "ແມ່" ຍັງສະແດງເຖິງຜູ້ມີບົດບາດສຳຄັນໃນການເບິ່ງແຍງລູກໆ, ມີຄວາມໄກ້ຊິດກັບລູກທີ່ສຸດ, ມີຄວາມອົດທົນໃນການລ້ຽງລູກແຕ່ນ້ອຍຈົນໃຫຍ່. ການຮຽກເອີ້ນວ່າ "ແມ່" ແມ່ນສະແດງເຖິງຄວາມຮັກ, ຄວາມເຄົາລົບເຊັ່ນ: "ຄ່ຳແລ້ວເປັນຫຍັງແມ່ບໍ່ກັບ ?". ຄຳສັບ "ແມ່" ຍັງສາມາດໃຊ້ເປັນຄຳນຳໜ້າຊື່ສະເພາະຂອງຜູ້ມີຖານະເປັນແມ່ເພື່ອຮຽກເອີ້ນ. ໃນການຮຽກເອີ້ນຊື່ສະເພາະພ້ອມທັງຄຳເຄືອຍາດເຊັ່ນ: "ອີ່ແມ່ເຮີຍ! ຢ່າຮ້ອງຫຼາຍດູ". ຄຳສັບ "ແມ່" ເພື່ອຢາກໃຫ້ມີຄວາມໝາຍບົ່ງບອກສະເພາະເຈາະຈົງລະອຽດເຮົາສາມາດເອົາຄຳເຄືອຍາດອື່ນທີ່ເຫັນວ່າມີຄວາມເໝາະສົມ. ແລະ ໃຊ້ຫຼາຍຢູ່ໃນສັງຄົມກໍຄືຍາດພີ່ນ້ອງມາຕື່ມທ້າຍຂອງຄຳສັບ "ແມ່" ເຊັ່ນ: ແມ່ ຕູ້, ແມ່ເຖົ້າ, ແມ່ດອງ, ແມ່ນ້າ, ແມ່ອາ, ເຊິ່ງຈະໄດ້ສະເໜີແຕ່ລະຄຳສັບ ດັ່ງລຸ່ມນີ້:

ຄຳສັບ "ແມ່ຕູ້" ໝາຍເຖິງຜູ້ຍິງທີ່ເປັນແມ່ຂອງແມ່ ແມ່ນການຮຽກເອີ້ນລະຫວ່າງແມ່ຕູ້ ແລະ ຫຼານ ເຊັ່ນວ່າ: "ແມ່ຕູ້ ! ຫຼຽນໄຊມາແຕ່ໂຮງຮຽນແລ້ວບໍ?". ຄຳສັບ "ແມ່ຕູ້"  ນອກຈາກຈະຮຽກເອີ້ນໃຫ້ແມ່ຂອງພໍ່ ຫຼື ແມ່ ແລ້ວຍັງໃຊ້ຮຽກເອີ້ນໃຫ້ຜູ້ມີອາຍຸສູງ, ອາວຸໂສ ເຊິ່ງເປັນການສະແດງການນັບຖື, ການເຄົາລົບ ແລະ ອື່ນໆ. ຄຳສັບ "ແມ່ເຖົ້າ"ແມ່ນການຮຽກເອີ້ນລະຫວ່າງແມ່ເຖົ້າ ແລະ ລູກເຂີຍ, ຫຼານ(ລູກຂອງລູກເຂີຍ)ສ່ວນຫຼາຍຈະແມ່ນຫຼານເປັນຜູ້ຮຽກເອີ້ນ ແລະ ຮຽກເອີ້ນໃຫ້ແມ່ຂອງແມ່. ຄຳສັບ "ແມ່ເຖົ້າ" ຍັງແມ່ນການຮຽກເອີ້ນໃຫ້ຍິງທີ່ມີອາຍຸຮຸ່ນຮາວຄາວດຽວກັບແມ່ເຖົ້າ ເປັນຄຳທີ່ພວກຫຼານຮຽກເອີ້ນໃຫ້ນ້ອງສາວຂອງແມ່. ສະນັ້ນ, ການຮຽກເອີ້ນວ່າ: "ແມ່ເຖົ້າ" ກໍແມ່ນການສະແດງເຖິງຄວາມນັບຖື, ຮັກແພງເຊັ່ນດຽວກັນ. ຄຳສັບ "ແມ່ດອງ" ແມ່ນໝາຍເຖິງຜູ້ຍິງທີ່ເປັນແກ່ວດອງກັນ. ເປັນຄຳທີ່ໄດ້ມາຈາກການແຕ່ງດອງຂອງພວກລູກໆໃນການແຕ່ງດອງ ມັນຈະມີເຖົ້າແກ່ທັງສອງຝ່າຍຄື: ເຖົ້າແກ່ຝ່າຍຊາຍ, ເຖົ້າແກ່ຝ່າຍຍິງເຊິ່ງພໍ່ແມ່ທັງສອງຝ່າຍຈະຮຽກເອີ້ນໃຫ້ຜູ້ຍິງໃນຝ່າຍໃດໜຶ່ງວ່າ: "ແມ່ດອງ".  ຄຳສັບ "ແມ່ນ້າ" ແມ່ນຄຳຮຽກເອີ້ນຂອງຫຼານ, ຮຽກເອີ້ນໃຫ້ນ້ອງສາວຂອງແມ່ ແລະ ເປັນການຮຽກເອີ້ນລະວ່າງຫຼານ ແລະ ແມ່ນ້າມັນເປັນສັບທ້ອງຖິ່ນໃຊ້ຫຼາຍຢູ່ທ້ອງຖິ່ນໂພນໂຮງ, ຊຽງຂວາງ ແລະ ບາງທ້ອງຖິ່ນຈະຮຽກເອີ້ນວ່າ: "ແມ່ສາວ" ເຊິ່ງແມ່ນການຮຽກເອີ້ນລະຫວ່າງຫຼານ ແລະ ແມ່ສາວ. ແຕ່ລະຄຳສັບທີ່ໃຊ້ຮຽກເອີ້ນນ້ອງສາວຂອງແມ່ເຊິ່ງແຕ່ລະທ້ອງຖິ່ນຖືວ່າເປັນສັບສຸພາບອ່ອນໂຍນຢູ່ແລ້ວ.ຄວາມໝາຍທີ່ສອງ: ຄຳສັບ "ແມ່ນ້າ" ແມ່ນເປັນຊື່ເອີ້ນເມຍໃໝ່ຂອງພໍ່ ຫຼື ແມ່ໃໝ່ຂອງລູກ (ລະຫວ່າງລູກນ້າ ແລະ ແມ່ນ້າ)ຄວາມໝາຍໃນທີ່ນີ້ແມ່ນບໍ່ສາມາດເອົາມາຮຽກເອີ້ນກັນໄດ້. ເພາະມັນຈະເປັນການຈຳແນກລະຫວ່າງລູກນ້າ ແລະ ແມ່ນ້າ. ສະນັ້ນ, ຈຶ່ງໃຊ້ຄຳສັບ "ແມ່" ຮຽກເອີ້ນແທນຄຳສັບ "ແມ່

ນ້າ" ຈະເປັນການຮຽກເອີ້ນກັນແບບທຳມະດາລະຫວ່າງພໍ່ແມ່ ແລະ ລູກ

ຄຳສັບ "ແມ່ອາ"ແມ່ນຄຳທີ່ພວກຫຼານຮຽກເອີ້ນນ້ອງສາວຂອງພໍ່ ເຊິ່ງເປັນການຮຽກເອີ້ນລະຫວ່າງຫຼານ ແລະ ແມ່ອາເພາະວ່າແມ່ອາ ແມ່ນນ້ອງສາວຂອງພໍ່ ດັ່ງນັ້ນ, ຫຼານຈຶ່ງຮຽກເອີ້ນວ່າ: ແມ່ອາເພື່ອສະແດງຄວາມນັບຖືຮັກແພງເໝືອນດັ່ງພໍ່ແມ່ຂອງຕົນເອງ.

ຮູບແຕ້ມສະແດງການຮຽກເອີ້ນເຄືອຍາດ " ອາ "




ຄຳສັບ "ເອື້ອຍ" ແມ່ນໝາຍເຖິງຄຳທີ່ເອີ້ນຍິງຜູ້ທີ່ເກີດກ່ອນຮ່ວມພໍ່ແມ່ດຽວກັນ ແລະ ເປັນຄຳເອີ້ນແມ່ນຜູ້ຍິງທີ່ມີອາຍຸສູງກວ່າເຮົາ ແຕ່ບໍ່ແມ່ນເຊື້ອສາຍດຽວກັນເອີ້ນເຊັ່ນກັນ ແມ່ນຜູ້ທີ່ມີອາຍຸຫຼາຍກວ່າພ້ອມທັງເປັນຍິງທີ່ມີມາລະຍາດ, ມີຄຸນສົມບັດທີ່ດີເປັນແບບຢ່າງໃຫ້ແກ່ພວກນ້ອງໆ. ດັ່ງນັ້ນ, ຜູ້ທີ່ມີຖາ ນະເປັນນ້ອງຈຶ່ງສະແດງຄວາມນັບຖື, ຄວາມຮັກແພງເວົ້າຈາສຸພາບຕໍ່ກັບຜູ້ມີຖານະເປັນເອື້ອຍໂດຍຜ່ານພາ ສາປາກເວົ້າ ແລະ ການປະພຶດທີ່ດີ, ເຊິ່ງເປັນການຮຽກເອີ້ນລະຫວ່າງນ້ອງ (ນ້ອງຊາຍ, ນ້ອງສາວ) ແລະເອື້ອຍເຊັ່ນ: "ເອື້ອຍ! ເອື້ອຍຝັນຮ້າຍບໍ?". ຄຳສັບ "ເອື້ອຍ" ຍັງໃຊ້ເປັນຄຳນຳໜ້າຊື່ສະເພາະວ່າຄຳສັບ "ເອື້ອຍ" ແມ່ນເຮົາສາມາດແທນໃຫ້ໄດ້ຫຼາຍຄົນ. ສະນັ້ນ, ເວລາເວົ້າເພື່ອບໍ່ໃຫ້ມີການຫຼົງຈຶ່ງຮຽກເອີ້ນໂດຍໃຊ້ຄຳເຄືອຍາດ ແລະ ຊື່ສະເພາະພ້ອມໆກັນເຊັ່ນ: "ເອື້ອຍເຮີຍ! ອ້າຍຊິນ້າໄດ້ກາຍມາເປັນຄົນແລ້ວ". ນອກຈາກນັ້ນ ເພື່ອໃຫ້ຄວາມໝາຍຂອງຄຳສັບເອື້ອຍມີຄວາມໝາຍກວ້າງອອກຕື່ມ ແລະ ມີຄວາມໝາຍບົ່ງບອກສະເພາະ ໂດຍວິທີເອົາຄຳເຄືອຍາດດ້ວຍກັນມາຕື່ມທ້າຍຂອງຄຳສັບເອື້ອຍຄື: ເອື້ອໃພ້, ເອື້ອຍນ້ອງ.

ຄຳສັບ " ເອື້ອຍໃພ້ "ແມ່ນຄຳທີ່ພວກນ້ອງ (ນ້ອງຂອງຜົວ) ຮຽກເອີ້ນໃຫ້ຍິງທີ່ເປັນເມຍຂອງອ້າຍແມ່ນການຮຽກເອີ້ນລະຫວ່າງເອື້ອຍໃພ້ ແລະ ນ້ອງ (ນ້ອງສາວ, ນ້ອງຊາຍ ) ເພາະວ່າການຮຽກເອີ້ນໂດຍໃຊ້ຄຳສັບ "ເອື້ອຍ" ຄວາມຮັກແພງ. ຖ້າວ່າການຜົວພັນລະຫວ່າງເອື້ຍໃພ້ ແລະ ນ້ອງ ຫາກມີຄວາມສະໜິດສະໜົມກັນເໝືອນດັ່ງເອື້ອຍນ້ອງຄີງແລ້ວກໍຮຽກເອີ້ນໃຊ້ແຕ່ຄຳສັບ"ເອື້ອຍ" ຮຽກເອີ້ນເທົ່ານັ້ນ.

- ຄຳສັບ ຄຳສັບ"ເອື້ອຍນ້ອງ "ຄຳຮຽກເອີ້ນໂດຍໃຊ້ຄຳສັບ "ເອື້ອຍນ້ອງ" ແມ່ນການສະແດງເຖິງຈຳນວນຫຼາຍເປັນການຮຽກເອີ້ນແບບລວມໆ ແລະແມ່ນການຮຽກເອີ້ນທັງເອື້ອຍ ແລະ ນ້ອງ ພ້ອມໆກັນບາງເທື່ອກໍແມ່ນການຮຽກເອີ້ນແທນໃຫ້ກຸ່ມຂອງຕົນບາງເທື່ອກໍແມ່ນຍາດຕິພີ່ນ້ອງຮຽກເອີ້ນໃຫ້ ເຊິ່ງເປັນການຮຽກເອີ້ນລະຫວ່າງໝູ່ເອື້ອຍນ້ອງ ແລະ ຍາດພີ່ນ້ອງ, ໝູ່ເພື່ອນດຽວກັນ ເຊັ່ນ: ເອື້ອຍຂຶ້ນຫ້ອງຍາມໃດກໍບໍ່ຄ່ອຍເຫັນນ້ອງ. ນອກຈາກນັ້ນ ຄຳສັບ ເອື້ອຍນ້ອງ ຍັງນຳໃຊ້ແບບທົ່ວໄປກັບກຸ່ມຄົນຈຳນວນຫຼາຍເປັນຕົ້ນແມ່ນແທນໃຫ້ກຸ່ມ, ໝວດ, ໝູ່ ແລະ ອື່ນໆເຊັ່ນ: ເອື້ອຍນ້ອງ ພວກເຮົາບໍ່ຕ້ອງຍອມ.

### 5.6. ຖານະການຮຽກເອີ້ນຄຳສັບ "ໃພ້" ເພື່ອຮຽກເອີ້ນ.

ຄຳສັບ "ໃພ້" ແມ່ນຄຳຮຽກເອີ້ໃຫ້ຜູ້ຍິງ ທີ່ມາເປັນໃພ້ ແລະ ແມ່ນການຮຽກເອີ້ນລະຫວ່າງ ລຸງ, ປ້າ ... ພ້ອມທັງຍາດພີ່ນ້ອງ ແລະ ຜູ້ທີ່ມາເປັນໃພ້. ຄຳສັບໃພ້ແມ່ນເປັນຄຳທີ່ຫຍໍ້ມາຈາກຄຳສັບລູກໃພ້ເຊິ່ງແມ່ນການຮຽກເອີ້ນແບບລວມໆ ສ່ວນຫຼາຍຈະແມ່ນຍາດພີ່ນ້ອງເປັນຜູ້ຮຽກເອີ້ນເຊັ່ນວ່າ: ຊັ້ນຊິເອົາກໍເອົາສາໃພ້ເອີຍ.

### 6. ຖານະການໃຊ້ຄຳສັບເຄືອຍາດເພື່ອຮຽກເອີ້ນເພດຊາຍໃນຄອບຄົວ ແລະ ຍາດພີ່ນ້ອງ.

ຖານະການໃຊ້ຄຳສັບເຄືອຍາດເພື່ອຮຽກເອີ້ນໃຫ້ບຸກຄົນຢູ່ໃນຄອບຄົວ ແລະ ຍາດພີ່ນ້ອງເປັນຕົ້ນ.

ແມ່ນການຮຽກເອີ້ນໃຫ້ຜູ້ຊາຍ. ຄຳເຄືອຍາດທີ່ຈະເອົາມາຮຽກເອີ້ນແມ່ນມີສອງຄວາມໝາຍຄື: ໃຊ້ເປັນຄຳຮຽກເອີ້ນເຊິ່ງກັນ ແລະ ກັນ ເພື່ອສື່ສານ ຫຼື ເປັນຄຳສະແດງຄວາມມີມາລະຍາດໃນການປາກເວົ້າ, ການໃຊ້ພາສາທີ່ສຸພາບ ແລະ ຄວາມໝາຍທີ່ສອງແມ່ນໃຊ້ເປັນຊື່ເອີ້ນຂອງບຸກຄົນ (ເອີ້ນຕາມຖານະບຸກຄົນ) ຫຼື ແມ່ນຊື່ທາງເຄືອຍາດ.ໃນສັງຄົມລາວການໃຊ້ຄຳເຄືອຍາດເພື່ອຮຽກເອີ້ນແມ່ນມີຄວາມສຳຄັນຫຼາຍເພາະມັນສະແດງ ເຖິງຄວາມມີມາລະຍາດໃນການປາກເວົ້າ, ສະແດງເຖິງການນັບຖືພ້ອມທັງເປັນການໃຫ້ກຽດເຊິ່ງກັນ ແລະ ກັນແຕ່ວ່າການໃຊ້ຄວນໃຊ້ໃຫ້ຖືກຕ້ອງຕາມຖານະບຸກຄົນ, ກາລະເທສະ ແລະ ສອດຄ່ອງກັບຕົວຈິງ. ຄຳເຄືອຍາດທີ່ສະແດງເຖິງ ເພດຊາຍເພື່ອໃຊ້ຮຽກເອີ້ນໃນຄອບບຄົວ ແລະ ຍາດພີ່ນ້ອງພ້ອມທັງບຸກຄົນອື່ນໆທີ່ມີສ່ວນກ່ຽວຂ້ອງປະກອບມີຄື: ປູ່ທວດ, ປູ່, ພໍ່, ອາວ, ອ້າຍ, ເຂີຍ, ບ່າວ, ເຊິ່ງຈະໄດ້ຊີ້ແຈງແຕ່ລະຄຳສັບ ດັ່ງລຸ່ມນີ້:

### 6.1. ຖານະການຮຽກເອີ້ນຄຳສັບ “ປູ່ທວດ” ເພື່ອຮຽກເອີ້ນ.

ຄຳສັບ “ປູ່ທວດ” ໝາຍເຖິງຜູ້ຊາຍທີ່ມີອາຍຸສູງ ແລະ ອາວຸໂສ ປູ່ທວດແມ່ນຜູ້ຊາຍທີ່ເປັນພໍ່ຂອງປູ່ເຊິ່ງແມ່ນການຮຽກເອີ້ນລະຫວ່າງຫຼານ, ເຫຼນ ແລະ ປູ່ທວດບາງທ້ອງຖິ່ນຈະເອີ້ນວ່າ: (ອໍເຖົ້າແກ່) ຄຳສັບນີ້ສ່ວນຫຼາຍແມ່ນໃຊ້ຢູ່ໃນທ້ອງຖິ່ນ (ແຂວງຫົວພັນ). ການຮຽກເອີ້ນວາ “ປູ່ທວດ” ຈະບໍ່ປະກົດເຫັນຫຼາຍຢູ່ໃນສັງຄົມລາວພຽງແຕ່ສະເໜີໃຫ້ຮູ້ວ່າປູ່ທວດແມ່ນໃຜ , ແມ່ນໃຜຮຽກເອີ້ນ ແລະ ເອີ້ນຫາໃຜ.

### 6.2. ຖານະການຮຽກເອີ້ນຄຳສັບ “ປູ່” ເພື່ອຮຽກເອີ້ນ.

ຄຳສັບ “ ປູ່ ” ແມ່ນໝາຍເຖິງຜູ້ຊາຍທີ່ມີອາ ຍຸສູງ, ເປັນແບບຢ່າງທີ່ດີ ເປັນການນັບຖືໃຫ້ຫຼານທັງຫຼາຍ. ປູ່ແມ່ນຜູ້ຊາຍທີ່ເປັນພໍ່ຂອງພໍ່ແມ່ນການຮຽກເອີ້ນລະຫວ່າງຫຼານ ແລະ ຜູ້ທີ່ເປັນປູ່. ຄຳສັບ “ປູ່” ຍັງແມ່ນຄຳຮຽກເອີ້ນຂອງຜູ້ຍິງທີ່ມາເປັນໃພ້ຮຽກເອີ້ນໃຫ້ພໍ່ຂອງຜົວຕົນເອງຢູວ່າ: “ປູ່” ເປັນການຮຽກເອີ້ນລະຫວ່າງລູກໃພ້ ແລະ “ປູ່” ແຕ່ບາງເທື່ອກໍຈະເອີ້ນວ່າ: ພໍ່ປູ່ ຍ້ອນແນວນັ້ນຈຶ່ງເວົ້າໄດ້ວ່າ: ຜູ້ຍິງທີ່ມາເປັນໃພ້ຮຽກເອີ້ນໃຫ້ພໍ່ຂອງຜົວວ່າ: “ປູ່” ແມ່ນຮຽກຕາມລູກ.

### 6.3. ຖານນະການຮຽກເອີ້ນຄຳສັບ “ລຸງ”ເພື່ອຮຽກເອີ້ນ.

ຄຳສັບ ລຸງ ແມ່ນໝາຍເຖິງຜູ້ຊາຍທີ່ຢູ່ໃນຖານະອ້າຍຂອງພໍ່ ຫຼື ແມ່ ລວມທັງຜົວຂອງປ້າ. ນອກນັ້ນ, ແມ່ນການເອີ້ນຜູ້ຊາຍທີ່ອາວຸໂສມີອາຍຸຮຸ່ນອ້າຍຂອງພໍ່ ຫຼື ແມ່ຂອງເຮົາກໍເອີ້ນລຸງເຊັ່ນກັນ. ຄຳວ່າ “ລຸງ”ມີການໃຊ້ຫຼາຍຢູ່ໃນສັງຄົມ, ຄອບຄົວ ແລະ ຍາດພີ່ນ້ອງ ເຊິ່ງການໃຊ້ຄຳດັ່ງກ່າວເພື່ອຮຽກເອີ້ນມັນຈະມີຄວາມສຸພາບ, ສະແດງຄວາມນັບຖື ແລະ ອື່ນໆ. “ລຸງ” ແມ່ນຜູ້ຊາຍທີ່ເປັນອ້າຍຂອງພໍ່ ແລະ ອ້າຍຂອງແມ່ ແຕ່ໃນສັງຄົມມີການຮຽກເອີ້ນໃຫ້ຜູ້ອື່ນອີກ. ນອກຈາກບຸກຄົນທີ່ໄດ້ກ່າວມາແລ້ວ ສ່ວນຫຼາຍແມ່ນມັນຈະຂຶ້ນກັບຜູ້ທີ່ຮຽກເອີ້ນຄື: ຜູ້ຊາຍທີ່ເປັນອ້າຍຂອງເມຍຮຽກເອີ້ນວ່າ: “ລຸງ” ແມ່ນການຮຽກເອີ້ນລະຫວ່າງນ້ອງເຂີຍ ແລະ ລຸງ ກໍລະນີຜົວເມຍ ນ້ອງເຂີຍຫາກມີລູກແລ້ວລູກຂອງເຂົາເຈົ້າຈະຮຽກເອີ້ນໃຫ້ອ້າຍຂອງແມ່ວ່າ: “ລຸງ” ບາງທີ່ຈະເອີ້ນວ່າ: ພໍ່ລຸງ ຍິ່ງເປັນການ ສະແດງຄວາມນັບຖືເໝືອນດັ່ງພໍ່ຂອງຕົນເອງ.

### 6.4. ຖານະການຮຽກເອີ້ນວ່າ: “ພໍ່” ເພື່ອຮຽກເອີ້ນ.

ຄຳສັບ “ພໍ່” ແມ່ນໝາຍເຖິງຜູ້ຊາຍທີ່ມີຄວາມຮັບຜິດຊອບວຽກງານຕ່າງໆໃນຄອບຄົວເປັນຜູ້ທີ່ມີສິດສັ່ງສອນລູກເຕົ້າໃຫ້ກາຍເປັນຄົນດີ, ມີຄວາມກ້າວໜ້າພ້ອມນັ້ນ ພໍ່ ຍັງສາມາດເປັນທີ່ປຶກສາໃຫ້ແກ່ພວກລູກ. ພໍ່ເປັນຜູ້ຊາຍທີ່ເຮັດໃຫ້ມີການກຳເນີດແກ່ລູກ ແລະ ແມ່ນການຮຽກເອີ້ນລະຫວ່າງພໍ່ ແລະ ລູກ ການຮຽກເອີ້ນໃຫ້ຜູ້ມີຖານະເປັນພໍ່ຈະ ລວມມີໝູ່ເພື່ອນ, ຜູ້ມີອາຍຸຮຸ່ນດຽວກັບພໍ່ ... ເຊັ່ນ: ລາວຢາກໃຫ້ພໍ່ພັກຜ່ອນ ແລະ ມີໂອກາດໄດ້ໃຊ້ເວ ລາທີ່ຍັງເຫຼືອຢູ່ໃຫ້ມີຄວາມສຸກກັບລູກກັບຫຼານກໍພໍ ແລ້ວ.

ຄຳສັບ “ພໍ່” ເພື່ອຢາກໃຫ້ມີຄວາມໝາຍຈະແຈ້ງດ້ວຍການມາຕື່ມທ້າຍຂອງຄຳສັບ “ພໍ່” ມີຄວາມບົ່ງບອກສະເພາະເຮົາສາມາດເອົາຄຳເຄືອຍາດດ້ວຍກັນ

ມາຕື່ມທ້າຍຂອງຄຳສັບ "ພໍ່" ແລ້ວເຮົາຈະໄດ້: ພໍ່ປູ່, ພໍ່ເຖົ້າ, ພໍ່ຕູ້, ພໍ່ດອງ, ພໍ່ອາວ, ພໍ່ນ້າ, ພໍ່ແມ່ ແຕ່ລະຄຳ ແມ່ນຈະຊີ້ແຈ້ງດັ່ງຕໍ່ໄປນີ້:

ຄຳສັບ "ພໍ່ປູ່" ແມ່ນຄຳສັບທີ່ຮຽກເອີ້ນໃຫ້ຜູ້ຊາຍທີ່ເປັນພໍ່ຂອງພໍ່ແມ່ນການຮຽກເອີ້ນລະຫວ່າງຜູ້ເປັນຫຼານ ແລະ ພໍ່ປູ ຫຼື ຍັງແມ່ນການຮຽກເອີ້ນລະຫວ່າງຜູ້ທີ່ເປັນລູກໃພ້ ແລະ ພໍ່ປູ່.

ຄຳສັບ "ພໍ່ເຖົ້າ" ແມ່ນເປັນຄຳທີ່ຜູ້ຊາຍທີ່ມາເປັນເຂີຍຮຽກເອີ້ນໃຫ້ພໍ່ຂອງເມຍວ່າ: "ພໍ່ເຖົ້າ" ເຊິ່ງແມ່ນການຮຽກເອີ້ນລະຫວ່າງລູກເຂີຍ ແລະ ພໍ່ເຖົ້າ. ພໍ່ເຖົ້າແມ່ນຜູ້ຊາຍເຊິ່ງເປັນພໍ່ຂອງເມຍ. ສ່ວນລູກເຂີຍຈະມັກເອີ້ນພໍ່ຂອງເມຍວ່າ: ພໍ່ ແທນໃຫ້ຄຳສັບພໍ່ເຖົ້າຍ້ອນສະແດງຄວາມຮັກແພງເໝືອນດັ່ງພໍ່ຂອງຕົນ. ແຕ່ຖ້າຮຽກເອີ້ນວ່າ: ພໍ່ເຖົ້າມັກຈະຮຽກເອີ້ນແທນໃຫ້ລູກ. ກໍລະນີຜົວເມຍລູກເຂີຍຫາກມີລູກແລ້ວລູກຂອງເຂົາເຈົ້າຈະຮຽກເອີ້ນໃຫ້ພໍ່ຂອງແມ່ວ່າ: "ພໍ່ເຖົ້າ" (ເອີ້ນຕາມພໍ່) ເຊິ່ງແມ່ນການຮຽກເອີ້ນໃຫ້ກັນລະຫວ່າງຫຼານກັບພໍ່ເຖົ້າເຊັ່ນ: ພໍ່ເຖົ້າເວົ້າວ່າຢູ່ໃນບ້ານພວກທະຫານສັດຕູ ມັນມາປະຈຳຢູ່ບ້ານນັ້ນບໍ່ໄດ້ຂາດ. ນອກນັ້ນ, ຄຳສັບ ພໍ່ເຖົ້າ ຍັງຮຽກເອີ້ນໃຫ້ຜູ້ອາວຸໂສ, ອາຍຸສູງ ພ້ອມທັງຜູ້ທີ່ເປັນໝູ່ເພື່ອນຂອງພໍ່ເຖົ້າຂອງຕົນ, ເພື່ອເປັນການສະແດງເຄົາລົບນັບຖື.

ຄຳສັບ "ພໍ່ຕູ້" ແມ່ນຄຳທີ່ຫຼານຮຽກເອີ້ນໃຫ້ຜູ້ຊາຍທີ່ເປັນພໍ່ຂອງແມ່ເຊິ່ງເປັນການຮຽກເອີ້ນລະຫວ່າງຫຼານກັບ ພໍ່ຕູ້. ຄຳສັບ "ພໍ່ຕູ້" ແມ່ນສາມາດຮຽກເອີ້ນແທນໃຫ້ຕົນ ຫຼື ຜູ້ເວົ້າເອງ ແລະ ຜູ້ທີ່ເຮົາລົມນຳ ຄຳສັບນີ້ນິຍົມໃຊ້ຫຼາຍໃນຂົງເຂດພາກກາງເຊັ່ນ: ແຂວງວຽງຈັນ, ນະຄອນຫຼວງວຽງຈັນ ເປັນ ຕົ້ນ.

ຄຳສັບ "ພໍ່ຕູ້" ນອກຈາກຈະໃຊ້ຮຽກເອີ້ນບຸກຄົນໃນຄອບຄົວ ແລະ ຍາດພີ່ນ້ອງແລ້ວຍັງໃຊ້ຮຽກເອີ້ນກັບຜູ້ທີ່ມີອາຍຸສູງ, ອາວຸໂສ ແລະ ອື່ນໆອີກເຊັ່ນ: ສະບາຍດີພໍ່ຕູ້ ພໍ່ຕູ້ຕອບເປັນພາສາພື້ນບ້ານ ເຈົ້າໂຜດລູກ.

ຄຳສັບ "ພໍ່ດອງ" ແມ່ນໝາຍເຖິງຜູ້ຊາຍທີ່ເປັນແກ່ວດອງກັນໃນເມື່ອລູກໆໄດ້ແຕ່ງງານ(ແຕ່ງດອງ) ໃນການແຕ່ງດອງຕ້ອງມີເຖົ້າແກ່ທັງສອງຝ່າຍ(ພໍ່ແມ່ຂອງເຈົ້າບ່າວ ແລະ ພໍ່ແມ່ຂອງເຈົ້າສາວ) ຈະຮຽກເອີ້ນໃຫ້ກັນວ່າ: ພໍ່ດອງ ( ເອີ້ນໃຫ້ສະເພາະຜູ້ຊາຍ ) ການຮຽກເອີ້ນວ່າ: ພໍ່ດອງຍ້ອນວ່າ: ພໍ່ແມ່ທັງສອງຝ່າຍໄດ້ມີຄວາມຜູກພັນສະໜິດແໜ້ນເປັນພີ່ນ້ອງກັນແມ່ນຍ້ອນມາຈາກການແຕ່ງດອງຂອງພວກລູກໆ. ສະນັ້ນ, ຈຶ່ງຮຽກເອີ້ນວ່າ: "ພໍ່ດອງ" ເຊັ່ນ: "ເປັນແນວໃດສະບາຍດີພໍ່ດອງ" ການທັກທາຍຂອງພໍ່ແມ່ຝ່າຍຊາຍ ແລະ ຝ່າຍຍິງ.

ຄຳສັບ "ພໍ່ອາວ" ແມ່ນແທນໃຫ້ຜູ້ຊາຍທີ່ເປັນຮຸ່ນດຽວກັບພໍ່ ແຕ່ອາຍຸຕ່ຳກວ່າພໍ່ຂອງຕົນເອງ. ສະນັ້ນ, ຈຶ່ງເອີ້ນວ່າ ພໍ່ອາວ ເຊິ່ງເປັນການຮຽກເອີ້ນລະຫວ່າງຫຼານ ແລະ ພໍ່ອາວການຮຽກເອີ້ນວ່າ: ພໍ່ອາວ ແມ່ນຈະຮຽກເອີ້ນຢູ່ບາງທ້ອງຖິ່ນເທົ່ານັ້ນ ແລະ ບາງທ້ອງຖິ່ນກໍຮຽກເອີ້ນວ່າ: ອາວ ພຽງຄຳດຽວ ເຊິ່ງມັນຂຶ້ນກັບຜູ້ໃຊ້ເຊັ່ນ: ພໍ່ອາວ ຫຼານກັບບ້ານກ່ອນເດີ.

ຄຳສັບ "ພໍ່ລຸງ"

ໝາຍເຖິງເພດຊາຍທີ່ມີຖານະເປັນອ້າຍຂອງພໍ່ ຫຼື ແມ່ ເຊິ່ງເປັນການຮຽກເອີ້ນລະຫວ່າງຫຼານ ແລະ ຜູ້ທີ່ເປັນພໍ່ລຸງ. ການຮຽກເອີ້ນແບບນີ້ກໍເພື່ອສະແດງຄວາມນັບຖືຜູ້ມີຖານະເປັນອາຍຂອງພໍ່ ແລະ ແມ່.

**6.5 ຖານະການຮຽກເອີ້ນຄຳສັບ "ອາວ" ເພື່ອຮຽກເອີ້ນ.**

ຄຳສັບອາວ ແມ່ນຄຳສັບທີ່ເປັນຊື່ເອີ້ນເພດຊາຍທີ່ມີເຊື້ອສາຍທາງພໍ່ ແລະ ມີອາຍຸຕ່ຳກວ່າພໍ່ກໍຄືນ້ອງຊາຍຂອງພໍ່ນັ້ນເອງເຊິ່ງມັນເປັນການຮຽກເອີ້ນລະຫວ່າງຫຼານ ແລະ ອາວເພື່ອສະແດງຄວາມເຄົາລົບນັບຖືອາດຈະໃຊ້ຄຳສັບພໍ່ອາວ ແລະ ຍັງແມ່ນຄຳສັບທີ່ຜູ້ຍິງເປັນໃພ້ຮຽກເອີ້ນໃຫ້ຍາດຝ່າຍຜົວວ່າ: ອາວຜູ້ຊາຍທີ່ເປັນນ້ອງຊາຍຂອງຜົວຮຽກເອີ້ນວ່າ: ອາວ ເປັນການຮຽກເອີ້ນລະຫວ່າງເອື້ອຍໃພ້ ແລະ ຜູ້ທີ່ເປັນອາວ. ກໍລະນີຜົວເມຍເອື້ອຍໃພ້ຫາກມີລູກແລ້ວລູກຂອງເຂົາເຈົ້າຈະຮຽກເອີ້ນໃຫ້ນ້ອງຊາຍຂອງພໍ່ວ່າ: ພໍ່ອາວ ຫຼື ອາວແມ່ນການຮຽກເອີ້ນລະຫວ່າງຫຼານ ແລະ ພໍ່ອາວ. ຜູ້ຊາຍທີ່ເປັນຜົວຂອງນ້ອງສາວ ຜົວຈະຮຽກເອີ້ນວ່າ

ອາວ ເຊິ່ງເປັນການຮຽກເອີ້ນລະ ຫວ່າງເອື້ອຍໃພ້ ແລະ ຜູ້ເປັນອາວ. ບາງເທື່ອຈະຮຽກເອີ້ນວ່າ: ອາວເຂີຍ. ການຮຽກເອີ້ນວ່າ ອາວເຂີຍກໍຍ້ອນວ່າ: ແມ່ນຜົວຂອງອາ.

**6.6 ຖານະການຮຽກເອີ້ນຄຳສັບ "ອ້າຍ" ເພື່ອຮຽກເອີ້ນ.**

ຄຳສັບວ່າ "ອ້າຍ" ໝາຍເຖິງຄຳທີ່ເອີ້ນເພດຊາຍຜູ້ທີ່ເກີດກ່ອນທີ່ເປັນລູກພໍ່ແມ່ດຽວກັນ ແລະ ເປັນຄຳເອີ້ນຜູ້ຊາຍທີ່ມີອາຍຸສູງກວ່າແຕ່ບໍ່ແມ່ນເຊື້ອສາຍດຽວກັນກໍເອີ້ນອ້າຍໄດ້ເຊັ່ນກັນ. ໃນສັງຄົມລາວ ການນຳໃຊ້ຄຳເຄືອຍາດ ອ້າຍ ເພື່ອຮຽກເອີ້ນແມ່ນໄດ້ໃຊ້ຫຼາຍຍ້ອນວ່າມັນເປັນຄຳສັບທີ່ສຸພາບ, ເວລາເວົ້າສະແດງເຖິງຄວາມນັບຖື, ສະແດງຄວາມມີມາລະ ຍາດໃນເວລາປາກເວົ້າ. ຄຳສັບ "ອ້າຍ" ໝາຍເຖິງຜູ້ຊາຍທີ່ເກີດກ່ອນນ້ອງຮຽກເອີ້ນວ່າ ອ້າຍ ໄດ້ອີງໃສ່ເງື່ອນໄຂຄື: ຮຽກເອີ້ນຕາມອາຍຸ, ຖານະບຸກຄົນ ແລະ ຮຽກເອີ້ນຕາມເຊື້ອສາຍ: ການຮຽກເອີ້ນຕາມອາຍຸ ແມ່ນໝາຍຄວາມວ່າ: ຜູ້ມີອາຍຸຕໍ່າຮຽກເອີ້ນໃຫ້ຜູ້ຊາຍທີ່ມີອາຍຸສູງກວ່າຕົນເອງ. ບາງເທື່ອບໍ່ແມ່ນຍາດພີ່ນ້ອງກັນກໍສາມາດໃຊ້ຮຽກເອີ້ນໄດ້ເຊັ່ນກັນ: ອ້າຍເຈັບຢູ່ບ່ອນໃດຫື ! ອ້າຍ? ການຮຽກເອີ້ນຕາມເຊື້ອສາຍ ແມ່ນຈະຮຽກເອີ້ນຕາມເຊື້ອສາຍຢູ່ໃນວົງຕະກຸນເທົ່ານັ້ນ. ຜູ້ຊາຍທີ່ຢູ່ໃນເຊື້ອອ້າຍຈະຕ້ອງຮຽກເອີ້ນອ້າຍສະເໝີ, ເຖິງຈະມີອາຍຸຕໍ່າກວ່າກໍຕາມ ເຊິ່ງແມ່ນຜູ້ທີ່ຢູ່ໃນເຊື້ອນ້ອງເປັນຜູ້ຮຽກເອີ້ນ. ການຮຽກເອີ້ນແບບນີ້ປັດຈຸບັນຄືຍັງມີຢູ່ບາງທ້ອງຖິ່ນເທົ່ານັ້ນ, ສ່ວນຫຼາຍແມ່ນນິຍົມຮຽກເອີ້ນຕາມອາຍຸ, ຖານະບຸກຄົນ. ນອງຈາກການນຳໃຊ້ຄຳເຄືອຍາດຮຽກເອີ້ນແທນຊື່ສະເພາະຂອງບຸກຄົນແລ້ວຍັງສາມາດເອົາຄຳເຄືອຍາດໃຊ້ເປັນຄຳນຳໜ້າຊື່ສະເພາະຂອງບຸກຄົນ (ຜູ້ມີຖານະເປັນອ້າຍ) ເພື່ອຮຽກເອີ້ນສະເພາະຜູ້ໃດຜູ້ໜຶ່ງເທົ່ານັ້ນ. ຄຳສັບອ້າຍ ເພື່ອຢາກໃຫ້ມີຄວາມບົ່ງບອກສັບເພາະຜູ້ໃດໜຶ່ງຢ່າງແນ່ນອນ ໂດຍການເອົາຄຳເຄືອຍາດມາຕື່ມໃສ່ທ້າຍຄຳສັບເຊັ່ນ: ອ້າຍເຂີຍ, ອ້າຍເອື້ອຍ,ອ້າຍນ້ອງ ແລະ ອ້າຍລຸງ.

ຄຳສັບ ອ້າຍເຂີຍ ແມ່ນຜູ້ຊາຍທີ່ເປັນຜົວຂອງເອື້ອຍ. ເປັນການຮຽກເອີ້ນລະຫວ່າງອ້າຍເຂີຍ ແລະ ນ້ອງ (ນ້ອງສາວນ້ອງຊາຍ) ຫຼື ແມ່ນການຮຽກເອີ້ນລະຫວ່າງນ້າບ່າວນ້າສາວ, ອ້າຍເຂີຍພ້ອມທັງຍາດຝ່າຍຍິງຮຽກເອີ້ນໃຫ້ຜູ້ຊາຍທີ່ມາເປັນຜົວຂອງເອື້ອຍ.

ຄຳສັບອ້າຍເອື້ອຍ ແມ່ນຄຳທີ່ຮຽກເອີ້ນໃຫ້ຜູ້ມີຖານະເປັນອ້າຍ ແລະ ເອື້ອຍ ຫຼື ຮຽກເອີ້ນໃຫ້ກຸ່ມຕົນເອງ ການຮຽກເອີ້ນໂດຍໃຊ້ຄຳສັບອ້າຍເອື້ອຍແມ່ນສະແດງເຖິງຈຳນວນຫຼາຍ ເປັນການຮຽກເອີ້ນລະຫວ່າງນ້ອງໆ, ຜູ້ມີອາຍຸຕໍ່າ ແລະ ຜູ້ມີຖານະເປັນອ້າຍເອື້ອຍ ເພື່ອສະແດງຄວາມນັບຖື ແລະ ຮັກ ແພງ.

ຄຳສັບ ອ້າຍນ້ອງ ແມ່ນຄຳທີ່ພໍ່ແມ່ ຫຼື ຍາດພີ່ນ້ອງເປັນຜູ້ຮຽກເອີ້ນໃຫ້, ເປັນການຮຽກເອີ້ນ ແບບພະຫຸພົດ ແຕ່ແມ່ນສະແດງເຖິງເພດຊາຍທີ່ຢູ່ໃນຖານະເປັນລູກໆ ຫຼື ເປັນການຮຽກເອີ້ນແທນໃຫ້ກຸ່ມຕົນເອງເຊັ່ນວ່າ: ໃຊ້ເພື່ອຮຽກເອີ້ນຢູ່ພາຍໃນກຸ່ມ, ໝວດ ແລະ ອື່ນໆ.

ຄຳສັບ ອ້າຍລຸງແມ່ນການຮຽກເອີ້ນໃຫ້ຜູ້ຊາຍທີ່ແມ່ນຍາດພີ່ນ້ອງ ແຕ່ແມ່ນເຊື້ອອ້າຍແຕ່ບໍ່ໄດ້ສະໜິດສະໜົມກັນປານໃດ ແຕ່ເປັນການຮຽກເອີ້ນແບບມີມາລະຍາດ, ນັບຖືເຊິ່ງກັນ ແລະ ກັນ ສ່ວນຫຼາຍແມ່ນຮຽກເອີ້ນທີ່ສຸພາບອ່ອນໂຍນ.

**7. ສະຫຼຸບຜົນ**

ຜ່ານການສຶກສາຄົ້ນຄວ້າຖານະການນຳໃຊ້ຄຳສັບຮຽກເອີ້ນສຳລັບຄົນໃນລະບົບເຄືອຍາດຂອງຊົນເຜົ່າລາວລຸ່ມມານັ້ນ ສາມາດສະຫຼຸບໄດ້ວ່າ: ຄຳສັບທີ່ໃຊ້ຮຽກເອີ້ນຄົນໃນລະບົບເຄືອຍາດໄດ້ແບ່ງອອກເປັນສອງເພດດ້ວຍກັນເຊັ່ນ:

- ຄຳຮຽກເອີ້ນໃຫ້ເພດຍິງມີຄື: ຍ່າທວດ, ແມ່ຍ່າ, ແມ່ເຖົ້າ, ແມ່ປ້າ, ແມ່ນ້າ, ນ້າ, ນ້າສາວ, ນ້າໃພ້, ອາ, ນ້ອງສາວ.

- ຄຳຮຽກເອີ້ນໃຫ້ເພດຊາຍມີຄື: ປູ່ທວດ, ປູ່, ພໍ່, ລຸງ, ອາວ, ນ້າບ່າວ, ອ້າຍ, ນ້ອງຊາຍ.

ນອກນີ້, ຍັງມີກຸ່ມພິເສດທີ່ບໍ່ບອກເພດແມ່ນຈັດຢູ່ໃນຈຳພວກ: ລູກ, ຫຼານ, ເຫຼນ ໆລໆ.

ໃນບົດຖານະການນຳໃຊ້ຄຳສັບຮຽກເອີ້ນສຳລັບຄົນໃນລະບົບເຄືອຍາດຂອງຊົນເຜົ່າລາວລຸ່ມແມ່ນໄດ້ເວົ້າກ່ຽວກັບມາລະຍາດໃນການຮຽກເອີ້ນຄົນໃນແຕ່ລະຖານະຂອງການຮຽກເອີ້ນເຊັ່ນ: ຜູ້ສູງອາຍຸ, ຜູ້ອາວຸໂສ, ແລະ ຜູ້ທີ່ມີອາຍຸຕ່ຳກວ່າ. ເປັນການເອີ້ນທີ່ໃຫ້ກຽດ, ເຄົາລົບນັບຖືເຊິ່ງກັນ ແລະ ກັນທາງສາຍຍາດ ຫຼື ຄົນທົ່ວໄປໃນສັງຄົມ ດ້ວຍການຊີ້ແຈງທາງດ້ານຄວາມໝາຍໃນການນຳໃຊ້ໃຫ້ຊັດເຈນຂຶ້ນຕື່ມອີກ.

**8. ເອກະສານອ້າງອີງ**

ແສງຟ້າໂຫລານຸພາບ (2005) ພາສາລາວນຳໃຊ້ ຄະນະອັກສອນສາດ ພາກວິຊາພາສາລາວ - ສື່ມວນຊົນ ມະຫາວິທະຍາໄລແຫ່ງຊາດ.

ບຸນຍໍ ພົມມະບຸດ ພ້ອມຄະນະ (2011) ແບບຮຽນພາສາລາວຊັ້ນມັດທະຍົມ ປີທີ 2 ກະຊວງສຶກສາທິການ ແລະ ກິລາ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

ອ່ອນແກ້ວ ນວນນະວົງ (2014) ແບບຮຽນພາສາລາວຊັ້ນມັດທະຍົມ ປີທີ 5 ກະຊວງສຶກສາທິການ ແລະ ກິລາ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

ພູມີ ວົງວິຈິດ (1991: 41) ໄວຍາກອນລາວ, ພິມເທື່ອທີ່ 2 ຈັດພິມໂດຍ ຫ້ອງການສູນກາງແນວລາວຮັກຊາດ.

ສີລາ ວິລະວົງ (1952) ໄວຍາກອນລາວ, ພາກທີ 2 ວາຈີວິພາກຂອງລາຊະບັນດິດສະພາ ກະຊວງສຶກສາທິການ.

ປົງຄຳ ສີສຸວັນ ພ້ອມຄະນະ (2000) ໄວຍາກອນລາວປັດຈຸບັນ. ກະຊວງສຶກສາທິການສະຖາບັນຄົ້ນຄວ້າວິທະຍາສາດການສຶກສາແຫ່ງຊາດ.

ຄຳເມີງ ດວງທອງລາ ພ້ອມດວ້ຍຄະນະ (2009) ກະຊວງສຶກສາທິກ, ກົມສ້າງຄູ, ພາສາລາວ2 ລະບົບ 11+3.

ພອນສີຣິ ອຸໄທວັນ ພ້ອມດວ້ມຄະນະ (2011) ແບບຮຽນພາສາລາວຊັ້ນມັດທະຍົມປີທີ 2, ກະຊວງສຶກສາທິການ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

ສີວຽງແຂກ ກອນນີວົງ ພ້ອມດວ້ຍຄະນະ (2010) ວັດຈະນານຸກົມພາສາລາວ (ລາວແປລາວ) ສະບັບປັບປຸງໃໝ່ ພິມຄັ້ງທີ 2 ສຳນັກພິມ ແລະ ຈຳໜ່າຍປື້ມແຫ່ງລັດ ສປປ ລາວ ນະຄອນຫຼວງວຽງຈັນ.

ອຳມາລາ ປະສິດລັດສິນ (2546) ປື້ມໄວຍາກອນພາສາອັງກິດ; ປື້ມຊະນິດຂອງຄຳໃນພາສາໄທ.

ຖະປະນີ ນາຄອນທັບ ພ້ອມດວ້ຍຄະນະ (2004: 73-88) ພາສາໄທ ມ1 ແລະ ມ2 ພິມຄັ້ງທີ 1, ຈັດພິມໂດຍບໍລິສັດ ອັກສອນຈະເລີນທັດ ອຈທ ພສ 2546.

ສູນພັດທະນາຄູ. (1998). ພາສາລາວ 1. ສຳລັບສ້າງຄູລະບົບ 11+3 ປີທີ 1. ໂຮງພິມກະຊວງສຶກສາທິການ ແລະ ກິລາ

ສູນພັດທະນາຄູ. (2009). ພາສາລາວ 2.ສຳລັບສ້າງຄູລະບົບ 11+3 ປີທີ 2. ໂຮງພິມກະຊວງສຶກສາທິການ ແລະ ກິລາ

ສູນພັດທະນາຄູ. (2009). ພາສາລາວ 3.ສຳລັບສ້າງຄູລະບົບ 11+3 ປີທີ2. ໂຮງພິມກະຊວງສຶກສາທິການ ແລະ ກິລາ.